


ກຸມພາ 2022

# ສຽງບໍ່ຄໍາເຊໂປນ

**ວາລະສານສໍາລັບພະນັກງານ ແລະ ຜູ້ຮັບເໝົາຂອງບໍ່ຄໍາ-ທອງ ເຊໂປນ**

## ໃນສະບັບນີ້

ປະທານ ຊີເຟີງຊຸດຄົ້ນຄໍາຢ້ຽມຄໍານັບ ຮອງປະທານສະພາແຫ່ງຊາດ ແລະ ຮອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່

ປະທານ ສະພາແຫ່ງຊາດ ຢ້ຽມຢາມ ບໍ່ຄໍາ-ທອງ ເຊໂປນ

ເຈົ້າແຂວງສະຫວັນນະເຂດ ຢ້ຽມຢາມພາກສະໜາມເຊໂປນ ເພື່ອທົບທວນມາດຕະການ ໂຄວິດ-19

ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ
万象矿业有限公司
CHIFENG LXML SEPON

# ສາລະບານ

















*4.* ຜົນການປະຕິບັດງານປີ 2021

*5.* ກຳມະການກົມການເມືອງສູນກາງພັກ, ປະທານຄະນະກວດກາສູນກາງພັກ ຢ້ຽມຢາມ ບໍ່ຄຳ-ທອງ ເຊໂປນ

*5.* ປະທານ ບໍລິສັດ ຊີເຟີງ ຊຸດຄົ້ນຄຳ ສະເຫຼີມສະຫຼອງການເປີດໂຮງງານອົກຊີແຊນໃໝ່ ຢູ່ ບໍ່ຄຳ-ທອງເຊໂປນ

*6.* ປະທານບໍລິສັດ ຊີເຟີງ ຊຸດຄົ້ນຄຳ ຢ້ຽມຄຳນັບ ຮອງປະທານສະພາແຫ່ງຊາດ ແລະ ຮອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່

*7.* ປະທານສະພາແຫ່ງຊາດ ຢ້ຽມຢາມພາກສະໜາມ ເຊໂປນ

*8.* ລາຍງານຄວາມຄືບໜ້າກ່ຽວກັບ ບໍ່ຄຳ-ທອງ ເຊໂປນ ໃຫ້ແກ່ ລັດຖະບານລາວ ແລະ ຜູ້ມີສ່ວນຮ່ວມຈາກຊຸມຊົນ ໃນກອງປະຊຸມທົບທວນທ້າຍປີ ຄັ້ງທີ 28

*9.* LXML ສະໜັບສະໜູນໜ່ວຍກູ້ໄພໃນ ນະຄອນຫຼວງວຽງຈັນ ແລະ ສະຫວັນນະເຂດ

*10.* LXML ສະໜັບສະໜູນ ແຂວງສະຫວັນນະເຂດ ແລະ ເມືອງວິລະບູລີ ໃນການຮັບມືກັບ COVID-19

*10.* LXML ສະໜັບສະໜູນການກວດຫາເຊື້ອ COVID-19 ຢູ່ແຂວງສະຫວັນນະເຂດ

*11.* ເຈົ້າແຂວງສະຫວັນນະເຂດຢ້ຽມຢາມ ບໍ່ຄຳ-ທອງ ເຊໂປນ ເພື່ອທົບທວນມາດຕະການ COVID-19

*12.* "ໂຊກ" ທ່າມກາງ COVID-19

*13.* ຂ້ອຍປິ່ນປົວຫາຍດີແລ້ວ ແລະ ຂ້ອຍປອດໄພດີເດີ້!

*14.* LXML ສະໜັບສະໜູນ ໂຮງໝໍພາກສະໜາມ ແຂວງສະຫວັນນະເຂດ

*15.* ຈະເວົ້າແນວໃດ ໃຫ້ເພື່ອນຮ່ວມງານໃສ່ຜ້າປິດປາກ-ດັງ?

*15.* ຄະນະສະເພາະກິດ COVID-19 ຂອງໂຄງການເຊໂປນ ເພີ່ມການເຝົ້າລະວັງໃນພາກສະໜາມ

*16.* ບິນສູງ: ມາພົບກັບ ນັກບິນໂດຣນຂອງ LXML

*17.* ວາງເປົ້າໝາຍ ເພື່ອການດຳເນີນງານທີ່ເປັນເລີດ

*19.* ຄາດຕະກອນໃນເງົາມືດ

*19.* ສະຖານີຕິດຕາມການເໜັງຕີງຂອງຝາບໍ່

*20.* ຄົ້ນພົບວັດຖຸບູຮານອາຍຸເກົ່າແກ່ 2000 ປີ ຢູ່ ບໍ່ຄຳ-ທອງເຊໂປນ

*20.* ຄົ້ນພົບ ວັດຖຸບູຮານ ຍຸກລ້ານຊ້າງ

*21.* ລາງວັນປັບປຸງຄວາມປອດໄພປະຈຳເດືອນ 7-8-9-ໄຕມາດ 3

*22.* ລະດູຈູດປ່າເຮັດໄຮ່: ເຊໂປນ ຕິດຕາມ-ຮັກສາຄຸນນະພາບອາກາດ ແລະ ສຸຂະພາບພະນັກງານ ແລະ ຊຸມຊົນ

*22.* ວັນເຮັດວຽກຢູ່ທີ່ສູງ ຢ່າງປອດໄພ

*23.* ທີມງານຊີເຈາະ ປັບປຸງຜົນການປະຕິບັດງານຢ່າງປອດໄພ ໂດຍບໍ່ຫວັ່ນລະດູຝົນ!

*24.* ກອງປະຊຸມປະຈຳເດືອນຂອງ ທີມງານບໍລິການພາກສະໜາມ ເນັ້ນໃສ່ຄວາມປອດໄພເປັນສິ່ງທຳອິດ

*24.* ຄວາມປອດໄພກ່ຽວກັບໄຟຟ້າ

*25.* ຄົບຮອບ 100 ປີ ພັກກອມມູນິດຈີນ

*27.* ພາບຂ່າວ

*29.* ວັນຊົມເຊີຍພະນັກງານຂອງ LXML!

*30.* ລາງວັນເຮັດວຽກຍາວນານ 2021




**ຂ່າວດີ ຂອງພວກເຮົາ ຂອງທຸກຄົນ**

ວາລະສານ ສຽງບໍ່ຄຳເຊໂປນ ຍິນດີຮັບເອົາ ແລະ ພິມເຜີຍແຜ່ ຂ່າວສານ ແລະ ຮູບພາບຂອງທ່ານ. ນອກຈາກນີ້ ພວກເຮົາ ຂໍຮຽນເຊີນທ່ານຈົ່ງສົ່ງຂໍ້ມູນກ່ຽວກັບງານ, ກິດຈະກຳ ຫຼື ວັນສຳຄັນ ຂອງພະແນກທ່ານ ທີ່ ທ່ານຄິດວ່າ ຈະເປັນຂໍ້ມູນດີໆ ສຳລັບຜູ້ອ່ານ ຂອງພວກເຮົາ ເປັນຕົ້ນແມ່ນ ງານທີ່ທ່ານເປັນຜູ້ຈັດ ຫຼື ຈະເຂົ້າຮ່ວມ.



# ລາວ "ສູ້" ຕ້ານ ໂຄວິດ-19



ໂດຍ: ສ.ອະເນກາ

ຈິງທີ່!! ຊາດໃດບໍ່ຕໍ່ສູ້!!
ນອນນັ່ງ ດູດຽວດາຍ!
ໝາ-ແມວ! ຫວງແຫນໄວ້!
ໝາ ເຫັນຄົນແປກໜ້າ

ພອຍແຕ່-ຊີຈິບຫາຍ (ແທ້ດາຍ!)
ກໍເທົ່າຕົນຕາຍແລ້ວ!
ເຮືອນຮັງ ບ່ອນມັນຢູ່!
ພະລັງເຕັ້ນ-ເຫົ່າຫອນ!

ເປັດ-ໄກ່ລ້ຽງ!!
ຈອນພອນ-ແຫຼວ ຊອມລັກ
ເກີດເປັນຄົນ-ຄວນຮູ້
ເກີດໂຣຄາ-ພະຍາດຮ້າຍ!

ລູກອ່ອນ-ຊອນໂຕ!!
ແມ່ມັນພະລັນສູ້!
ສັກສີຂອງປະເທດ!
ກໍໂຮມສູ້-ຊ່ວຍກັນ!!

ໂລກ! ເຮັ່ງຮ້ອນ!
ຄວນທີ່! ຄົນລາວ-ຮັກ!
ໂຮມແຮງກາຍ-ໃຈພ້ອມ!
ຊ່ວຍກັນ ຕ້ານພະຍາດຮ້າຍ!

ລຸມລະບາດ-ໄພພິບັດ!
ເຜົ່າພັນ-ພົງເຊື້ອ!!!
ສາມັກຄີ-ຮັກຫໍ່!!!
ໃຫ້ໜີເວັ້ນຫຼີກໄກ

ໜຶ່ງນັ້ນ! ຢ່າໄດ້! ເກເລເວົ້າ!!
ວ່າຜູ້ນັ້ນ-ດ່າຜູ້ນີ້!!
ຢ່າໄດ້! ຫຼົບ-ຫຼີກລີ້!
ເອົາແຕ່ຕາມໃຈຕົນ!

ກະທຳທາງບໍ່ເຂົ້າທ່າ!
ຜູ້ດີໄດ້ ແມ່ນແຕ່ໂຕ!
ໜີພ່າຍ-ເຂົ້າມາລາວ
ບໍ່ຮ່ວມໂຮມ-ແຮງສູ້!!!

ດີທີ່: ຂໍຜ່ານເຂົ້າ
ພັກ-ລັດ ຊົມເຊີຍດອມ!
ແມ່ນແຕ່ເປັນເຈັບໄຂ້!
ເພິ່ນກໍຍັງ ຊ່ວຍເຈົ້າ!

ຕາມດ່ານສາກົນ!
ຊ່ວຍຕົວຕົນເຈົ້າ!
ໂຄວິດ-ຕິດພະຍາດ!
ປົວໃຫ້-ຢູ່ສະເໝີ!

ສະນັ້ນ! ຢ່າໄດ້ລັກລອບເຂົ້າ
ມັນຊິຜິດກົດໝາຍ!
ຊິອັບອາຍ-ຂາຍໜ້າ!
ຄັນວ່າ ຕິດພະຍາດຮ້າຍ

ປາຍດ່ານ-ຊາຍເຂົາ! (ແທ້ແລ)
ເພິ່ນຈ່ອງຈຳ-ຕົນເຈົ້າ!!
ເພາະທຳທີ-ທາງບໍ່ແມ່ນ!
ຊິຍາຍໃຫ້-ພໍ່ແມ່ຕົນ! (ຕື່ມແລ)

ອີກໜຶ່ງ! ຄັນທ່ານ ເປັນເຈັບໄຂ້!
ກໍໃຫ້ບອກ-ກ່າວແຈ້ງ
ລັກປິດບັງ-ອຳພາງ!
ຊິຕິດໄກ-ໄປໜ້າ

ສົງໃສຕົນ-ຕິດພະຍາດ!
ລາຍງານພ້ອມ-ດ່ວນພະລັນ!
ຍິ່ງຊິມີ-ຜົນຮ້າຍ!
ກະຈາຍໄປ-ໃສ່ຜູ້ອື່ນ!

ແກ້ບ່ອນນັ້ນ! ຍັງບ່ອນນີ້ ບໍ່ມີມື້ ວ່າຊິຫາຍ ທ່ານ ເອີຍ.....

# ຜົນການປະຕິບັດງານປີ 2021

- ເລີ່ມຂຸດຄົ້ນແຮ່ ທີ່ບໍ່ຜາວັດ ແລະ ບໍ່ວັງຍາງ.
- ເລີ່ມວຽກໜ້າດິນ ສຳລັບການຂະຫຍາຍອ່າງນ້ຳຫາງແຮ່.
- ເລີ່ມການຂະຫຍາຍໃຫຍ່ ລະບົບແຍກຄຳ.
- ເລີ່ມສຳຫຼວດໃນເຂດພາກພື້ນ ພາຍຫຼັງໄດ້ໂຈະໄປຫຼາຍປີ.
- ເລີ່ມການນຳໃຊ້ໂຮງງານອົກຊີແຊນ.
- ມຸ່ງໜ້າດຳເນີນການສຳລັບບໍ່ໄຕ້ດິນ.
- ກິດຈະກຳການຂຸດຄົ້ນແຮ່ ເພື່ອປັບປຸງປະສິດທິພາບ ແລະ ຜົນຜະລິດ (ຈັກຊໍ, ເຄື່ອງສະແກນປະລິມານແຮ່ຢູ່ເທິງລົດ, ນຳໃຊ້ລົດຈັກໃໝ່, ສູນຄຸ້ມຄອງການດຳເນີນງານບໍ່ແຮ່)
- ສູນຄຸ້ມຄອງການດຳເນີນງານບໍ່ແຮ່ 'ເປັນລະບົບອອນລາຍ': ລະບົບ HxGN.

- 99% ຂອງພະນັກງານ ແລະ ຜູ້ຮັບເໝົາ ໄດ້ຮັບວັກຊີນປ້ອງກັນ COVID-19 ຢ່າງຄົບຖ້ວນ.
- ເລີ່ມການສັກວັກຊີນ COVID-19 ເຂັມກະຕຸ້ນ ໂດຍໃຊ້ວັກຊີນ AstraZeneca.
- >45,000 ເທື່ອກວດຫາເຊື້ອ COVID-19 ໃນທົ່ວພາກສະໜາມ, ແຂວງສະຫວັນນະເຂດ ແລະ ນະຄອນຫຼວງວຽງຈັນ.

- ກໍ່ສ້າງປະຕູນ້ຳ ສຳລັບການປົກປ້ອງສິ່ງແວດລ້ອມ ແລະ ການດຳເນີນງານທີ່ປອດໄພ.

- ຮັກສາລະດັບການດຳເນີນງານ A+.
- ໄດ້ຕໍ່ໃບອະນຸຍາດລົງທຶນ.
- ລົງນາມບົດບັນທຶກຄວາມເຂົ້າໃຈ ລະຫວ່າງ LXML ແລະ ກະຊວງປ້ອງກັນປະເທດ, ຕໍ່ຂອບວຽກງານເກັບກູ້ລະເບີດທີ່ບໍ່ທັນແຕກ.
- ການຢ້ຽມຢາມພາກສະໜາມຂອງການນຳຂັ້ນສູງ: ປະທານສະພາແຫ່ງຊາດ, ກຳມະການກົມການເມືອງສູນກາງພັກ ແລະ ປະທານກວກກາພັກ, ເຈົ້າແຂວງສະຫວັນນະເຂດ.
- ສະໜອງ US$500,000 ສຳລັບວຽກງານປ້ອງກັນ COVID-19.
- ເປີດໂຕເວັບໄຊ້ຂອງ LXML, ແລະ ການນຳໃຊ້ສື່ສັງຄົມອອນລາຍ.
- ເປີດກຸ່ມເຟສບຸກ ສຳລັບ ພະນັກງານ ແລະ ຜູ້ຮັບເໝົາຂອງ LXML.
- ການກັບມາດຳເນີນງານຂອງສູນຫວັຍກົງ.

- ປ່ຽນຄອມພິວເຕີ.
- ປັບປຸງລະບົບວາຍຟາຍ ແລະ 4G
- ປັບປຸງລະບົບວິນໂດ້ 10

## 5 ອັນດັບ ຍອດຮິດ ສື່ສັງຄົມ ອອນລາຍ

| | | | | |
|---|---|---|---|---|
| 2.5k likes, 117k reach | 1 | 
| 1.1k likes, 38.4k reach | 2 |
| 972 likes, 38.9k reach | 3 |
| 897 likes, 30.8k reach | 4 |
| 677 likes, 12.9k reach | 5 |

| Recent content | Type | Reach | Likes and reactions |
|---|---|---|---|
| ********** ຮັບສະໝັກງານຫຼາຍຕຳແໜ່ງ... Tue Jul 6, 4:48am | Post | 117K | 2.5K |
| [ENG ⬇] ມື້ວານນີ້, ເຈົ້າແຂວງສະຫວັນນະເ... Fri Aug 27, 6:52am | Post | 38.4K | 1.1K |
| [ENG ⬇] ໃນມື້ນີ້, ປະທານ ສະພາແຫ່ງຊາດ ... Tue Jun 15, 4:44am | Post | 38.9K | 972 |
| [Eng ⬇] ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເ... Mon Apr 26, 6:30pm | Post | 30.8K | 897 |
| [ENG ⬇⬇] ແຂວງສະຫວັນນະເຂດ ຮັບຮອງ... Wed Oct 6, 4:14am | Post | 12.9K | 677 |

# ກຳມະການກົມການເມືອງສູນກາງພັກ, ປະທານຄະນະ ກວດກາສູນກາງພັກ ຢ້ຽມຢາມພາກສະໜາມ ເຊໂປນ



**16 ກໍລະກົດ 2021** - ພະນະທ່ານ ຄຳພັນ ພົມມະທັດ, ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ປະທານ ຄະນະກວດກາສູນກາງພັກ, ປະທານ ອົງການກວດກາແຫ່ງລັດ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງຂັ້ນສູນກາງ ພ້ອມດ້ວຍຄະນະ ແລະ ການນຳແຂວງສະຫວັນນະເຂດ ໄດ້ໃຫ້ກຽດຢ້ຽມຢາມ ບໍ່ຄຳ-ທອງ ເຊໂປນ ເພື່ອຊົມການຜະລິດຄຳທີ່ເພີ່ມຂຶ້ນ ກໍຄື ແຜນການກ່ຽວກັບໂຄງການຄຳ, ພ້ອມທັງຮັບຟັງການລາຍງານກ່ຽວກັບ ຜົນສຳເລັດດ້ານການປະຕິບັດວຽກງານສິ່ງແວດລ້ອມ, ຄວາມປອດໄພ, ມາດຕະການປ້ອງກັນໂຄວິດ-19, ການພັດທະນາຊຸມຊົນຂອງບໍລິສັດ ແລະ ການຮ່ວມມືທີ່ດີຢ່າງສະເໝີມາ ກັບອຳນາດການປົກຄອງທ້ອງຖິ່ນ.

ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ (LXML) ເປັນວິສາຫະກິດແບບຢ່າງໃນ ສປປ ລາວ ແລະ ໄດ້ຮັບລາງວັນຍ້ອງຍໍລະດັບດີເລີດ (A+) ຢ່າງສະເໝີມາ ເຊິ່ງມອບໂດຍ ກະຊວງພະລັງງານ ແລະ ບໍ່ແຮ່ ສຳລັບການປະຕິບັດໄດ້ມາດຕະຖານສາກົນດ້ານການຂຸດຄົ້ນບໍ່ແຮ່.

ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ LXML ໄດ້ກ່າວວ່າ: *"LXML ມີຄວາມມຸ່ງໝັ້ນ ຕໍ່ການຮ່ວມມື ແລະ ເຮັດວຽກຮ່ວມກັນຢ່າງຕັ້ງໜ້າ ກັບລັດຖະບານ ໃນນາມຄູ່ຮ່ວມພັດທະນາ. LXML ມີຄວາມພາກພູມໃຈສຳລັບການປະກອບສ່ວນ ຕໍ່ການພັດທະນາເສດຖະກິດ-ສັງຄົມໃນ ສປປ ລາວ."*

ໃນຖານະຄູ່ຮ່ວມພັດທະນາ ແລະ ຜູ້ຈ່າຍພາສີອາກອນສຳຄັນໃນ ສປປ ລາວ, LXML ມີຄວາມມຸ່ງໝັ້ນເປັນບໍລິສັດຂຸດຄົ້ນບໍ່ແຮ່ທີ່ດີເລີດ ແລະ ສ້າງຄວາມອຸດົມຮັ່ງມີໃຫ້ແກ່ສັງຄົມ.

ການລົງຢ້ຽມຢາມ ບໍ່ຄຳ-ທອງ ເຊໂປນໃນຄັ້ງນີ້ ແມ່ນເປັນພາກສ່ວນໜຶ່ງ ໃນພາລະກິດຂອງລັດຖະບານໃນແຂວງ ບໍລິຄຳໄຊ, ສະຫວັນນະເຂດ ແລະ ຈຳປາສັກ ໃນລະຫວ່າງວັນທີ 14 ຫາ 21 ມິຖຸນາ 2021.

# ປະທານ ຊີເຝີງຂຸດຄົ້ນຄຳ ຮ່ວມສະເຫຼີມສະຫຼອງ ເປີດໂຮງງານອົກຊີແຊນ ຢູ່ ບໍ່ຄຳ-ທອງ ເຊໂປນ

**02 ສິງຫາ 2021** - ປະທານ ບໍລິສັດ ຊີເຟີງຂຸດຄົ້ນຄຳ ທ່ານ ຫວາງ ຈ້ຽນຫົວ ໄດ້ໃຫ້ກຽດເປັນສັກຂີພິຍານ ການເປີດໂຮງງານອົກຊີແຊນຢ່າງເປັນທາງການ ຢູ່ ໂຄງການຄຳ-ທອງ ເຊໂປນ ພ້ອມທັງສະເຫຼີມສະຫຼອງນິມິດໝາຍສຳຄັນນີ້ກັບ ທີມງານຂອງ LXML.

ໂຮງງານອົກຊີແຊນໃໝ່ ເປັນອົງປະກອບໜຶ່ງຂອງ 'ໂຄງການເຊໂປນ 2.5' ຂອງ LXML ທີ່ຖືກອອກແບບມາເພື່ອເພີ່ມກຳລັງການປ້ອນແຮ່ເຂົ້າໂຮງງານຜະລິດຄຳເຄົ້າ ຈາກ 1,5 ລ້ານໂຕນຕໍ່ປີ ເປັນ 2,5 ລ້ານໂຕນ ຕໍ່ປີ. ບໍລິສັດຊີເຟີງ ໄດ້ລົງທຶນຫຼາຍຮ້ອຍລ້ານໂດລາສະຫະລັດເພື່ອຮັບປະກັນອະນາຄົດຂອງ LXML. ການລົງທຶນເຫຼົ່ານີ້ຈະສະໜັບສະໜູນ ຜົນການຜະລິດຄຳທີ່ເພີ່ມຂຶ້ນ ແລະ ຍືດອາຍຸຂອງບໍ່ຄຳ-ທອງເຊໂປນໄປອີກ 10 ປີ ຢ່າງຕໍ່າ.




ທ່ານ ຫວາງ ຈ້ຽນຫົວ, ປະທານ ຊີເຟີງ ຈີຫຼົງຂຸດຄົ້ນຄຳ ໄດ້ກ່າວວ່າ: *"ຂ້າພະເຈົ້າມີຄວາມພາກພູມໃຈ ທີ່ໄດ້ເຫັນຄວາມຄືບໜ້າຢ່າງກ້າວກະໂດດຂອງ ໂຄງການຄຳ-ທອງເຊໂປນ ໃນໄລຍະສອງປີຜ່ານມານີ້. ຂ້າພະເຈົ້າຂໍສະແດງຄວາມຂອບໃຈມາຍັງ ພະນັກງານ ແລະ ຜູ້ຮັບເໝົາຂອງພວກເຮົາ, ກໍຄື ການຮ່ວມມືທີ່ເຂັ້ມແຂງກັບ ລັດຖະບານ ແລະ ຊຸມຊົນ. ສປປ ລາວ ເປັນບ່ອນທີ່ເອື້ອອຳນວຍແກ່ການລົງທຶນ ແລະ ການດຳເນີນທຸລະກິດ."*

ໃນວາລະທີ່ ທ່ານ ຫວາງ ມາຢ້ຽມຢາມຄັ້ງນີ້, ທ່ານ ໄດ້ພົບປະກັບ ພະນັກງານຂອງໂຄງການຄຳ-ທອງເຊໂປນ ແລະ ຜູ້ມີສ່ວນຮ່ວມຈາກກະຊວງພະລັງງານ ແລະ ບໍ່ແຮ່.



# ປະທານ ຊີເຟີງຂຸດຄົ້ນຄຳ ຢ້ຽມຄຳນັບ ຮອງປະທານສະພາແຫ່ງຊາດ ແລະ ຮອງລັດ ຖະມົນຕີກະຊວງ ພະລັງ ງານ ແລະ ບໍ່ແຮ່

**04 ສິງຫາ 2021** - ປະທານບໍລິສັດ ຊີເຟີງ ຈີຫຼົງຂຸດຄົ້ນຄຳ ທ່ານ ຫວາງ ຈ້ຽນຫົວ ໄດ້ຢ້ຽມຄຳນັບທ່ານ ສົມມາດ ພົນເສນາ - ຮອງປະທານສະພາແຫ່ງຊາດ ແລະ ທ່ານ ທອງພັດ ອິນທະວົງ - ຮອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ເນື່ອງໃນໂອກາດທີ່ທ່ານ ມາຢ້ຽມຢາມ ສປປ ລາວ ເຊິ່ງເປັນ ຄັ້ງທີສອງ ຕັ້ງແຕ່ ບໍລິສັດ ຊີເຟີງ ໄດ້ກ້າວມາເປັນຜູ່ຖືຮຸ້ນສ່ວນໃຫຍ່ໃນ LXML ນັບແຕ່ປີ 2018 ເປັນຕົ້ນມາ. ທ່ານ ຫວາງ ໄດ້ລາຍງານຄວາມຄືບໜ້າຂອງໂຄງການຄຳ-ທອງ ເຊໂປນ ພ້ອມທັ້ງຢັ້ງຢືນແຜນການຂະຫຍາຍກິດຈະການດັ່ງກ່າວໃນ ສປປ ລາວ.

ທ່ານ ຫວາງ ໄດ້ສະແດງຄວາມຂອບໃຈຕໍ່ລັດຖະບານລາວ ທີ່ໄດ້ໃຫ້ການສະໜັບສະໜູນແກ່ LXML ແລະ ບໍ່ຄຳ-ທອງ ເຊໂປນ ສະເໝີມາ.

ບໍລິສັດ ຊີເຟີງ ໄດ້ກັບຄືນມາຜະລິດຄຳ ໃນປີ 2020 ແລະ ຍືດອາຍຸ ບໍ່ຄຳ-ທອງ ເຊໂປນອອກໄປອີກ ເຮັດໃຫ້ສາມາດສືບຕໍ່ສ້າງຜົນປະໂຫຍດ ດ້ານເສດຖະກິດໃຫ້ແກ່ ສປປ ລາວ.

ທ່ານ ຫວາງ ຈ້ຽນຫົວ, ປະທານ ບໍລິສັດ ຊີເຟີງ ຈີຫຼົງຂຸດຄົ້ນຄຳ ໄດ້ກ່າວວ່າ *"ຄວາມປອດໄພ ແລະ ການປົກປັກຮັກສາສິ່ງແວດລ້ອມ ເປັນບຸລິມະສິດສຳຄັນທີ່ສຸດໃນຂະແໜງການບໍ່ແຮ່."*

ທ່ານ ຫວາງ ຍັງໄດ້ກ່າວຕື່ມອີກວ່າ: *"ຂ້າພະເຈົ້າມີຄວາມພາກພູມໃຈ ທີ່ໄດ້ເຫັນຄວາມຄືບໜ້າຂອງໂຄງການຂຸດຄົ້ນບໍ່ຄຳ-ທອງ ເຊໂປນ ທີ່ສາມາດສືບຕໍ່ດຳເນີນໄປໃນຊ່ວງໄລຍະທີ່ມີຄວາມທ້າທາຍຈາກການລະບາດຂອງພະຍາດ COVID-19. ບໍລິສັດຊີເຟີງ ຂໍຢັ້ງຢືນຄວາມ ໝາຍໝັ້ນໃນການຮ່ວມມືຢ່າງໃກ້ຊິດ ກັບ ລັດຖະບານລາວ ເພື່ອສະໜັບສະໜູນການສ້າງວຽກເຮັດງານທຳ ແລະ ການພັດທະນາເສດຖະກິດໃນ ສປປ ລາວ ກໍຄື ການຜ່ານຜ່າການລະບາດໂຄວິດນີ້ໄປນຳກັນ."*

ທ່ານ ສົມມາດ ພົນເສນາ, ຮອງປະທານສະພາແຫ່ງຊາດ ກໍໄດ້ໄດ້ຍ້ອງຍໍບໍລິສັດ ຊີເຟີງ ແລະ LXML ສຳລັບການສະໜັບສະໜູນໃຫ້ແກ່ພາກລັດ ໃນໄລຍະການລະບາດຂອງພະຍາດ COVID-19. ຕັ້ງແຕ່ເລີ່ມມີການລະບາດຂອງພະຍາດໂຄວິດໃນ ສປປ ລາວ, LXML ໄດ້ປະກອບສ່ວນເປັນທຶນຮອນຫຼາຍກວ່າ US$500.000 ໃຫ້ແກ່ລັດຖະບານລາວ ເພື່ອຈັດຊື້ວັກຊີນ, ສະໜັບສະໜູນວຽກງານວິເຄາະ-ກວດຫາເຊື້ອ, ກັກບໍລິເວນ, ແພດໝໍ, ໜ່ວຍກູ້ໄພ ແລະ ວຽກງານຮັບມືສຸກເສີນອື່ນໆ.









# ປະທານສະພາແຫ່ງຊາດ ຢ້ຽມຢາມ ບໍ່ຄຳ–ທອງ ເຊໂປນ

**15 ມິຖຸນາ 2021** - ປະທານ ສະພາແຫ່ງຊາດ ພະນະທ່ານ ປອ ໄຊສົມພອນ ພົມວິຫານ ໄດ້ເຂົ້າຮ່ວມພິທີອັນເຊີນຮູບຫຼໍ່ເຄິ່ງຄີງປະທານ ໄກສອນ ພົມວິຫານ ທັງເປັນວິລະບູລຸດຂອງຊາດ ກໍຄື ປວງຊົນລາວ ຂຶ້ນປະດິດສະຖານ ທີ່ອະນຸສອນສະຖານຂອງທ່ານປະທານ ທີ່ເມືອງ ວິລະບູລີ, ແຂວງສະຫວັນນະເຂດ.

ປອ ໄຊສົມພອນ ພົມວິຫານ ພ້ອມຂະນະລວມທັງ ເຈົ້າແຂວງສະຫວັນນະເຂດ ທ່ານ ສັນຕິພາບ ພົມວິຫານ, ຍັງໄດ້ລົງຢ້ຽມຢາມໂຄງການຄຳ-ທອງເຊໂປນ ເພື່ອຢ້ຽມຊົມການຜະລິດ ແລະ ຮັບຟັງການລາຍງານກ່ຽວກັບ ຜົນສຳເລັດດ້ານວຽກງານສິ່ງແວດລ້ອມ, ຄວາມປອດໄພ ແລະ ການພັດທະນາຊຸມຊົນຂອງບໍລິສັດ. LXML ເປັນວິສາຫະກິດແບບຢ່າງໃນ ສປປ ລາວ ແລະ ໄດ້ຮັບລາງວັນຍ້ອງຍໍລະດັບດີເລີດ (A+) ຢ່າງສະເໝີມາ ເຊິ່ງມອບໂດຍ ກະຊວງພະລັງງານ ແລະ ບໍ່ແຮ່ ໃນດ້ານການປະຕິບັດໄດ້ຕາມມາດຕະຖານສາກົນດ້ານການຂຸດຄົ້ນບໍ່ແຮ່, ການປົກປັກຮັກສາສິ່ງແວດລ້ອມ, ການພັດທະນາຊຸມຊົນ ແລະ ມາດຕະຖານດ້ານຄວາມປອດໄພໃນການດຳເນີນໂຄງການ.

ອະນຸສອນສະຖານ-ຮູບຫຼໍ່ເຄິ່ງຄີງປະທານ ໄກສອນ ພົມວິຫານ ແມ່ນໄດ້ຮັບການກໍ່ສ້າງຈາກກອງທຶນພັດທະນາຊຸມຊົນ ທີ່ສະໜັບສະໜູນໂດຍບໍລິສັດ LXML. ນອກຈາກນີ້ແລ້ວ ໃນຜ່ານມາບໍລິສັດຍັງໄດ້ກໍ່ສ້າງຫໍວັດທະນະທຳເມືອງວິລະບູລີ ເພື່ອຊຸກຍູ້ການທ່ອງທ່ຽວໃນພາກພື້ນ ນຳອີກດ້ວຍ.

ທ່ານ ສະໝານ ອະເນກາ, ອຳນວຍການໃຫຍ່ LXML ໄດ້ກ່າວວ່າ: *"ບໍ່ວ່າຍາມໃດກໍຕາມ ບໍລິສັດ LXML ແມ່ນຍັງສືບຕໍ່ສະໜັບສະໜູນການພັດທະນາບຸກຄະລາກອນ ແລະ ຊຸມຊົນເຈົ້າພາບ. ບໍລິສັດມີຄວາມພາກພູມໃຈທີ່ໄດ້ປະກອບສ່ວນສ້າງຮູບຫຼໍ່ເຄິ່ງຄີງ ກໍຄື ອະນຸສາວະລີ ປະດິດສະຖານໄວ້ໃນໃຈກາງເມືອງວິລະບູລີ, ແຂວງສະຫວັນນະເຂດ ທີ່ເປັນແຂວງຖິ່ນກຳເນີດຂອງພະນະທ່ານ ໄກສອນ ພົມວິຫານ-ຜູ້ກໍ່ຕັ້ງພັກປະຊາຊົນປະຕິວັດລາວ ແລະ ສປປ ລາວ ເພື່ອເປັນກຽດອັນສູງສົ່ງໃຫ້ແກ່ພະນະທ່ານ."*

ພິທີທີ່ເປັນນິມິດໝາຍສຳຄັນຄັ້ງນີ້ ແມ່ນໄດ້ຈັດຂຶ້ນທີ່ອະນຸສອນສະຖານ ກໍຄື ຫ້ອງການເມືອງວິລະບູລີ. ພາຍໃຕ້ການນຳພາຂອງການນຳເມືອງວິລະບູລີ ໂດຍສົມທົບກັບບໍລິສັດ LXML, ການກໍ່ສ້າງເດີ່ນສວນອ້ອມອະນຸສອນສະຖານປະທານ ໄກສອນ ພົມວິຫານ ແມ່ນໄດ້ເລີ່ມຂຶ້ນໃນເດືອນກຸມພາ 2021.

ໃນຜ່ານມາ, ນັບແຕ່ປີ 2003, ກອງທຶນພັດທະນາຊຸມຊົນຂອງ LXML ໄດ້ລົງທຶນ US$10 ລ້ານ ສະໜັບສະໜູນເມືອງວິລະບູລີ ເພື່ອປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດລາວ.

ໃນຖານະຄູ່ຮ່ວມພັດທະນາສຳຄັນໃນ ສປປ ລາວ, LXML ມີຄວາມມຸ່ງໝັ້ນເປັນບໍລິສັດຂຸດຄົ້ນບໍ່ແຮ່ດີເລີດ ແລະ ສ້າງຄວາມອຸດົມຮັ່ງມີໃຫ້ແກ່ສັງຄົມ.




# ລາຍງານຄວາມຄືບໜ້າກ່ຽວກັບ ບໍ່ຄຳ–ທອງ ເຊໂປນ ໃຫ້ແກ່ລັດຖະບານ ແລະ ຜູ້ມີສ່ວນຮ່ວມຈາກຊຸມຊົນ ໃນກອງປະຊຸມ 6 ເດືອນທ້າຍປີ ຄັ້ງທີ 28

**10 ສິງຫາ 2021** – ລຊມລ ໄດ້ລາຍງານກ່ຽວກັບຄວາມຄືບໜ້າ ແລະ ອະນາຄົດຂອງບໍ່ຄຳ-ທອງເຊໂປນ ໃຫ້ແກ່ ຜູ້ຕາງໜ້າ 60 ທ່ານ ຈາກ ພາກລັດຖະບານ ແລະ ຊຸມຊົນ. ຜູ້ຈັດການໃຫຍ່ ລຊມລ ທ່ານ ພໍ ແຮຣິສ ໄດ້ລາຍງານກ່ຽວກັບແຜນການຍືດອາຍຸບໍ່ແຮ່ເຊໂປນ ດ້ວຍການເລັ່ງຂະຫຍາຍວຽກງານສຳຫຼວດ ແລະ ລົງທຶນມະຫາສານໃສ່ໂຮງງານ ແລະ ອຸປະກອນໃໝ່ໆ.

ໂດຍການເປັນປະທານຮ່ວມຂອງ ຮອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ທ່ານ ທອງພັດ ອິນທະວົງ ແລະ ຮອງເຈົ້າແຂວງສະຫວັນນະເຂດ ທ່ານ ວຽງທະວີສອນ ເທບພະຈັນ, ກອງປະຊຸມຄັ້ງນີ້ ມີການເຂົ້າຮ່ວມຈາກຂະແໜງການພາກລັດທີ່ກ່ຽວຂ້ອງ ລວມທັງ ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ພ້ອມຜູ້ຕາງໜ້າຈາກຊຸມຊົນ ແລະ ອົງການຂັ້ນຮາກຖານ. ບໍລິສັດ ລຊມລ ຈັດກອງປະຊຸມກັບຜູ້ມີສ່ວນຮ່ວມເປັນປະຈຳ ແຕ່ກໍໄດ້ຖືກໂຈະຊົ່ວຄາວຍ້ອນ ມາດຕະການຈຳກັດການລະບາດພະຍາດ COVID-19.

ຜູ້ເຂົ້າຮ່ວມກອງປະຊຸມ ໄດ້ປຶກສາຫາລືກ່ຽວກັບ ຜົນການປະຕິບັດງານດ້ານຄວາມປອດໄພ ແລະ ສິ່ງແວດລ້ອມ, ສິ່ງທ້າທາຍໃນການປະຕິບັດງານໃນໄລຍະວິກິດການ COVID-19, ຜົນປະໂຫຍດດ້ານເສດຖະກິດໃຫ້ແກ່ ສປປ ລາວ, ໂຄງລ່າງພື້ນຖານ, ການຝຶກອົບຮົມ ແລະ ພັດທະນາບຸກຄະລະກອນ, ແຜນການປິດບໍ່ ແລະ ການພັດທະນາຊຸມຊົນ. ຍ້ອນການສະໜັບສະໜູນຈາກ ພະແນກສາທາລະນະສຸກແຂວງສະຫວັນນະເຂດ, LXML ຈຶ່ງສາມາດ ສັກວັກຊີນຄົບໂດສ ໃຫ້ແກ່ 99% ໃນພະນັກງານທັງໝົດ 5,000ຄົນ ແລະ ໄດ້ເລີ່ມສັກເຂັມທີ 3 ໃນເດືອນທັນວາ 2021. LXML ໄດ້ວາງມາດຕະການປ້ອງກັນຢ່າງເຂັ້ມງວດ ລວມທັງ ການກັກບໍລິເວນ ແລະ ການກວດຫາເຊື້ອໃຫ້ແກ່ພະນັກງານ ເປັນຕົ້ນ, ພ້ອມທັງ ເລັ່ງໃສ່ສັກວັກຊີນໃຫ້ແກ່ພະນັກງານ ແລະ ຜູ້ຮັບເໝົາທຸກຄົນ ເພື່ອປ້ອງກັນການແຜ່ລະບາດຂອງເຊື້ອພະຍາດ COVID-19 ແລະ ປົກປ້ອງພະນັກງານ, ຄອບຄົວ ແລະ ຊຸມຊົນ.

ທ່ານ ພໍ ແຮຣິສ, ຜູ້ຈັດການໃຫຍ່ ລຊມລ ໄດ້ກ່າວວ່າ: *"ໂຄງການຂຸດຄົ້ນ-ຜະລິດຄຳ-ທອງເຊໂປນ ໄດ້ປະເຊີນຄວາມທ້າທາຍຫຼາຍປະການ, ແຕ່ພວກເຮົາໝັ້ນໃຈວ່າ ຈະສາມາດຜ່ານຜ່າໄດ້ ດ້ວຍການສະໜັບສະໜູນຢ່າງສະເໝີຕົ້ນສະເໝີປາຍຂອງຜູ້ມີສ່ວນຮ່ວມ."*

ຕັ້ງແຕ່ເລີ່ມດຳເນີນງານໃນປີ 2003, ບໍລິສັດ ລຊມລ ໄດ້ປະກອບສ່ວນ US$1,6 ຕື້ ເປັນລາຍຮັບໂດຍກົງໃຫ້ແກ່ລັດຖະບານລາວ ຜ່ານການຈ່າຍພາສີອາກອນ, ຄ່າຊັບພະຍາກອນແຮ່ທາດ ແລະ ເງິນປັນຜົນ. ນອກຈາກນັ້ນຍັງໄດ້ປະກອບສ່ວນຜົນປະໂຫຍດທາງອ້ອມຫຼາຍຮ້ອຍລ້ານໂດລາສະຫະລັດ ຜ່ານການຈັດຊື້ສິນຄ້າ-ການບໍລິການທ້ອງຖິ່ນ, ການພັດທະນາທຸລະກິດ ແລະ ຊຸມຊົນ. ບໍ່ຄຳ-ທອງເຊໂປນ ໄດ້ກັບມາສູ່ຍຸກແຫ່ງການເຕີບໂຕຄືນໃໝ່ ຍ້ອນການລົງທຶນຂອງ ບໍລິສັດ ຊີເຟີງ ເພື່ອໃຫ້ບັນລຸຜົນປະໂຫຍດຈາກ ທ່າແຮງຂອງປະລິມານແຮ່ຄຳທຳມະຊາດ ແລະ ແຮ່ອື່ນໆໃນ ສປປ ລາວ.




# LXML ສະໜັບສະໜູນໜ່ວຍກູ້ໄພ ນະຄອນຫຼວງວຽງຈັນ ແລະ ສະຫວັນນະເຂດ

**ໃນເດືອນ ພຶດສະພາ 2021** - LXML ໄດ້ບໍລິຈາກ 60.000.000 ກີບໃຫ້ແກ່ ໜ່ວຍກູ້ໄພໃນນະຄອນຫຼວງວຽງຈັນ ແລະ ແຂວງສະຫວັນນະເຂດ ເພື່ອ ສະໜັບສະໜູນຄວາມອາດສາມາດໃນການຮັບມືກັບເຫດການສຸກເສີນ.

ມູນນິທິຊ່ວຍເຫຼືອຄົນທຸກຍາກແຫ່ງ ສປປ ລາວ (ຫຼື ໜ່ວຍກູ້ໄພ 1623), ສະມາຄົມອາສາກູ້ໄພນະຄອນຫຼວງວຽງຈັນ (ຫຼື ໜ່ວຍກູ້ໄພ 1624) ແລະ ໜ່ວຍກູ້ໄພ ແຂວງສະຫວັນນະເຂດ ແມ່ນໄດ້ຮັບ 20.000.000 ກີບ ຕໍ່ພາກສ່ວນ ເພື່ອ ສະໜັບສະໜູນວຽກງານຮັບມືເຫດການສຸກເສີນໃນໄລຍະການລະບາດຂອງພະຍາດ COVID-19 ໃນ ສປປ ລາວ.

ໃນຂະນະທີ່ ສປປ ລາວ ຮັບມືກັບຄື້ນທີສອງຂອງການລະບາດພະຍາດ COVID-19 ໃນຊຸມຊົນ ຢູ່ນະຄອນຫຼວງວຽງຈັນ ແລະ ແຂວງອື່ນໆ, ໜ່ວຍກູ້ໄພ ແມ່ນໄດ້ຊ່ວຍທີມງານແພດໝໍໃນການສົ່ງຜູ້ຕິດເຊື້ອໄປ-ກັບຈາກໂຮງໝໍ ເຊິ່ງ ເປັນວຽກງານເພີ່ມຕື່ມຈາກ ອຸປະຕິເຫດ ແລະ ເຫດການສຸກເສີນທີ່ໜ່ວຍກູ້ໄພ ໄດ້ຮັບມືທັງເວັນ ແລະ ຄືນໃນທຸກໆວັນຕະຫຼອດປີ.

ທ່ານ ສະໝານ ອະເນກາ, ຮອງຜູ້ຈັດການໃຫຍ່ LXML ກ່າວວ່າ: *"ໃນໄລຍະວິກິດນີ້ ພວກເຮົາບໍ່ຄວນລືມພະນັກງານປະຈັນບານແນວໜ້າ ກໍຄື ໜ່ວຍກູ້ໄພ. ພວກເຮົາມີຄວາມຍິນດີທີ່ໄດ້ຊ່ວຍບັນດາອາສາສະໝັກເຫຼົ່ານີ້ ຜູ້ທີ່ເຮັດວຽກແນວໜ້າທັງເວັນທັງຄືນ ໃນໄລຍະຫຍຸ້ງຍາກນີ້ ເພື່ອປົກປ້ອງ ຊຸມຊົນຂອງພວກເຮົາຈາກພະຍາດ COVID-19."*















# LXML ສະໜັບສະໜູນ ແຂວງສະຫວັນນະເຂດ ແລະ ເມືອງວິລະບູລີ ໃນການຮັບມືກັບ ໂຄວິດ – 19

**ມິຖຸນາ 2021** - LXML ໄດ້ບໍລິຈາກ US$15,000 ໃຫ້ແກ່ ແຂວງສະຫວັນນະເຂດ ແລະ 50 ລ້ານກີບ ໃຫ້ແກ່ ເມືອງວິລະບູລີ ເພື່ອ ສະໜັບສະໜູນວຽກງານປ້ອງການ ແລະ ຕ້ານການລະບາດຂອງພະຍາດ COVID-19.

*"ແຂວງສະຫວັນນະເຂດໄດ້ຕັ້ງໜ້າຮັບມືກັບການສະກັດກັ້ນ ແລະ ຄວບຄຸມຄື້ນທີ 2 ຂອງການລະບາດພະຍາດ COVID-19 ສຳເລັດ ຕັ້ງແຕ່ຫົວທີ ຈົນມາຮອດປັດຈຸບັນສ່ວນໃຫຍ່ກໍເປັນກໍລະນີນຳເຂົ້າ-ກໍລະນີແຮງງານເດີນທາງກັບມາປະເທດຢ່າງຖືກກົດໝາຍ"* ໄດ້ກ່າວ ທ່ານ ສະໝານ ອະເນກາ. *"ທາງບໍລິສັດ ພູມໃຈທີ່ ເງິນຊ່ວຍເຫຼືອຂອງພວກເຮົາຈະປະກອບສ່ວນສານຕໍ່ວຽກງານ ກໍຄື ຄວາມພະຍາຍາມຂອງແຂວງ ໃນການຮັກສາໃຫ້ຊຸມຊົນປອດໄພຈາກພະຍາດ COVID-19 ແລະ ໃນຕໍ່ໜ້າຟື້ນຟູເສດຖະກິດທ້ອງຖິ່ນ."*

ນັບຕັ້ງແຕ່ມີການລະບາດຂອງພະຍາດ COVID-19, LXML, ແຂວງສະຫວັນນະເຂດ ແລະ ເມືອງວິລະບູລີ ໄດ້ເຮັດວຽກຮ່ວມກັນຢ່າງໃກ້ຊິດ ເພື່ອຮັບປະກັນໃຫ້ພະນັກງານ ແລະ ຊຸມຊົນທ້ອງຖິ່ນປອດໄພຈາກພະຍາດ COVID-19.

ອຳນາດການປົກຄອງເມືອງວິລະບູລີ ແລະ ແຂວງສະຫວັນນະເຂດ ໄດ້ປະຕິບັດມາດຕະການຢ່າງເຂັ້ມງວດ ໃນການປ້ອງກັນການລະບາດພະຍາດ COVID-19.

# LXML ສະໜັບສະໜູນການກວດຫາເຊື້ອ ໂຄວິດ-19 ຢູ່ແຂວງສະຫວັນນະເຂດ




**28 ກັນຍາ 2021** - ບໍ່ຄຳ-ທອງເຊໂປນ ໄດ້ບໍລິຈາກເຄື່ອງກວດຫາເຊື້ອ COVID-19 ແບບ RT – PCR ແລະ ອຸປະກອນກ່ຽວຂ້ອງຕ່າງໆໃຫ້ແກ່ ພະແນກສາທາລະນະສຸກແຂວງສະຫວັນນະເຂດ ເພື່ອປັບປຸງຄວາມອາດສາມາດໃນການກວດຫາເຊື້ອ ແລະ ຄົ້ນຫາຜູ້ຕິດເຊື້ອພາຍໃນແຂວງ.

ອຸປະກອນທີ່ມອບໃນຄັ້ງນີ້ ເປັນການສານຕໍ່ການຊ່ວຍເຫຼືອຜ່ານໆມາຂອງ LXML ໃຫ້ແກ່ແຂວງສະຫວັນນະເຂດ ລວມທັງ ຫ້ອງນ້ຳ-ຫ້ອງອາບນ້ຳຢູ່ໂຮງໝໍພາກສະໜາມ, ອຸປະກອນການແພດ ແລະ ການສະໜອງທຶນໂດຍກົງ ລວມມູນຄ່າທັງໝົດຫຼາຍກວ່າ US$112.000 ເຂົ້າໃນການຮັບມືກັບການລະບາດພະຍາດ COVID-19. LXML ຍັງໄດ້ບໍລິຈາກ ຊຸດກວດເຊື້ອແບບໄວທີ່ໄດ້ຮັບການອະນຸມັດໂດຍອົງການອະນາໄມໂລກ ແລະ ທັງໄດ້ປະກອບສ່ວນສ້າງ ໂຮງໝໍພາກສະໜາມຢູ່ ເມືອງວິລະບູລີ. ມາຮອດປັດຈຸບັນ, LXML ໄດ້ບໍລິຈາກປະມານ US$500.000 ເພື່ອຊ່ວຍລັດຖະບານລາວໃນການປ້ອງກັນ ແລະ ຮັບມືກັບການລະບາດຂອງພະຍາດ COVID-19.

ທ່ານ ສະໝານ ອະເນກາ, ຮອງຜູ້ຈັດການໃຫຍ່ LXML ໄດ້ກ່າວວ່າ: *"ທາງບໍລິສັດຮັບຮູ້ວ່າ ການຄົ້ນຫາຜູ້ສຳຜັດໃກ້ຊິດ, ການກວດເຊື້ອ, ການຈຳກັດບໍລິເວນ, ການປິ່ນປົວ ແລະ ການສັກວັກຊີນຢ່າງທັນການ ແລະ ຕັ້ງໜ້ານັ້ນ ແມ່ນມີຄວາມສຳຄັນຕໍ່ການຄວບຄຸມການລະບາດຂອງພະຍາດ COVID-19. ພວກເຮົາຫວັງວ່າການຊ່ວຍເຫຼືອຂອງບໍລິສັດຈະຮັບປະກັນໃຫ້ ຊຸມຊົນທ້ອງຖິ່ນ ແລະ ແຂວງສະຫວັນນະເຂດ ປອດໄພຈາກພະຍາດ COVID-19. ພວກເຮົາສືບຕໍ່ເຮັດວຽກຢ່າງໃກ້ຊິດກັບ ຜູ້ມີສ່ວນຮ່ວມທຸກຂັ້ນບໍ່ວ່າຂັ້ນສູນກາງ, ແຂວງ ແລະ ເມືອງ."*

ເຄື່ອງກວດເຊື້ອແບບ PCR ແມ່ນໄດ້ມອບໃຫ້ແກ່ ທ່ານນາງ ຫຼີງທອງ ແສງຕາວັນ, ຮອງເຈົ້າແຂວງສະຫວັນນະເຂດ ແລະ ຫົວໜ້າຄະນະສະເພາະກິດ COVID-19 ຂັ້ນແຂວງ ມອບໂດຍ ທ່ານ ທ່ອນແກ້ວ ພຸດທະໄກຍະລາດ, ທີ່ປຶກສາຂອງ LXML.

ມາຮອດປັດຈຸບັນ, ແຂວງສະຫວັນນະເຂດ ມີເຄື່ອງກວດເຊື້ອແບບ PCR 4 ເຄື່ອງ ໂດຍສາມາດກວດເຊື້ອເພີ່ມຂຶ້ນໄດ້ 720 ຕົວຢ່າງຕໍ່ວັນ.

# ເຈົ້າແຂວງສະຫວັນນະເຂດ ຢ້ຽມຢາມ ພາກສະໜາມເຊໂປນ ເພື່ອທົບທວນມາດຕະການ ໂຄວິດ-19




**26 ສິງຫາ 2021** - ເຈົ້າແຂວງສະຫວັນນະເຂດ ທ່ານ ສັນຕິພາບ ພົມວິຫານ ພ້ອມດ້ວຍຄະນະຈາກພະແນກສາທາລະນະສຸກ ແຂວງສະຫວັນນະເຂດ ໄດ້ລົງຢ້ຽມຢາມບໍ່ຄຳ-ທອງເຊໂປນ ແລະ ເມືອງວິລະບູລີ ເພື່ອຊຸກຍູ້ວຽກງານປ້ອງກັນການແຜ່ລະບາດຂອງເຊື້ອພະຍາດ COVID-19. ທ່ານ ສັນຕິພາບ ພົມວິຫານ ໄດ້ລົງກວດກາ ຄລີນິກ ພາກສະໜາມເຊໂປນ ເພື່ອຕິດຕາມການກວດຫາເຊື້ອພະຍາດ COVID-19 ຂອງພະນັກງານ, ສູນຈຳກັດບໍລິເວນ ແລະ ສູນແຍກປ່ຽວ, ການຄົ້ນຫາຜູ້ສຳຜັດໃກ້ຊິດ ແລະ ມາດຕະການປ້ອງກັນອື່ນໆ.

ການລົງຢ້ຽມຢາມແມ່ນພາຍຫຼັງ ສະໜາມເຊໂປນມີການລາຍງານກໍລະນີຢັ້ງຢືນຕິດເຊື້ອ COVID-19 ເປັນກໍລະນີທຳອິດໃນພະນັກງານຜູ້ຮັບເໝົາຂອງບໍລິສັດ.

ໃນຂະນະທີ່ຈຳນວນຜູ້ຕິດເຊື້ອ COVID-19 ເພີ່ມຂຶ້ນ ແລະ ການເພີ່ມທະວີມາດຕະການລ໋ອກດາວຢູ່ ແຂວງສະຫວັນນະເຂດ ແລະ ທົ່ວປະເທດ, LXML ໄດ້ຈັດຕັ້ງປະຕິບັດມາດຕະການປ້ອງກັນການລະບາດຂອງເຊື້ອພະຍາດ COVID-19 ຢູ່ ພາກສະໜາມເຊໂປນ ຢ່າງເຄັ່ງຄັດ ລວມທັງ ການກວດຫາເຊື້ອແບບແອນຕີເຈັນສຳລັບພະນັກງານ ແລະ ຜູ້ຮັບເໝົາທຸກຄົນກ່ອນທີ່ຈະເດີນທາງກັບເຂົ້າສະໜາມເຊໂປນ ແລະ ໃນຂະນະຢູ່ພາກສະໜາມ, ການຈັດຜຽນວຽກທີ່ຍາວຂຶ້ນ, ການຈຳກັດບໍລິເວນກ່ອນ ແລະ ຫຼັງຈາກເຂົ້າ-ອອກສະໜາມ ແລະ ການຮັກສາໄລຍະຫ່າງທາງສັງຄົມ ໃນນັ້ນ ມີການຍົກເລີກການຫຼິ້ນກິລາທຸກປະເພດ ແລະ ຫ້າມຈຳໜ່າຍເຄື່ອງດື່ມມຶນເມົາ.

ຍ້ອນການສະໜັບສະໜູນຂອງ ພະແນກສາທາລະນະສຸກ ແຂວງວະຫວັນນະເຂດ ພະນັກງານ ແລະ ຜູ້ຮັບເໝົາ ຂອງ LXML 99% ໃນຈຳນວນ 5,000 ຄົນ ໄດ້ຮັບວັກຊີນຢ່າງຄົບຖ້ວນ. ທີມງານຂອງບໍລິສັດໄດ້ຮີບຮ້ອນຕັ້ງໜ້າເຮັດວຽກຮ່ວມກັບ ອຳນາດການປົກຄອງເມືອງ ແລະ ແຂວງ ເພື່ອກວດຄົ້ນຫາຜູ້ສຳຜັດໃກ້ຊິດ, ກວດເຊື້ອ ແລະ ແຍກປ່ຽວກໍລະນີສ່ຽງ.

ໃນການລົງຢ້ຽມຢາມຄັ້ງນີ້, ທ່ານເຈົ້າແຂວງ ໄດ້ຮຽກຮ້ອງໃຫ້ອຳນາດການປົກຄອງເມືອງວິລະບູລີເລັ່ງແຜນງານສັກວັກຊີນຂອງເມືອງ, ແຍກປ່ຽວກໍລະນີຢັ້ງຢືນຕິດເຊື້ອ ແລະ ເຮັດວຽກຮ່ວມກັບ LXML ເພື່ອສ້າງຕັ້ງໂຮງໝໍສະໜາມ.

ໃນວັນທີ 2 ກັນຍາ 2021, LXML ແລະ ອຳນາດການປົກຄອງເມືອງວິລະບູລີເຫັນດີໃນການສະໜັບສະໜູນການສ້າງຕັ້ງໂຮງໝໍສະໜາມ ທີ່ໂຮງຮຽນມັດທະຍົມພູຄຳ, ບ້ານບຸ່ງຄຳ. ທັງສອງຝ່າຍເຫັນດີໃນການສະໜອງສິ່ງອຳນວຍຄວາມສະດວກແບບຊົ່ວຄາວ, ສະໜອງແພດໝໍ, ອຸປະກອນ ແລະ ເຄື່ອງມືທີ່ຈຳເປັນຕ່າງໆ.

ໃນວັນທີ 4 ກັນຍາ 2021, ທ່ານນາງ ຫຼົງທອງ ແສງຕາວັນ, ຮອງເຈົ້າແຂວງສະຫວັນນະເຂດ ແລະ ຫົວໜ້າຄະນະສະເພາະກິດ COVID-19 ຂັ້ນແຂວງ ພ້ອມດ້ວຍທີມງານພະແນກສາທາລະນະສຸກ ໄດ້ລົງກວດກາ ການຮັບມື ແລະ ເຮັດວຽກຮ່ວມກັບ LXML ໃນການຈັດຕັ້ງປະຕິບັດມາດຕະການປ້ອງກັນ ແລະ ຄວບຄຸມ COVID-19. ທີມງານໄດ້ລົງກວດກາສະຖານທີ່ ກະກຽມເປັນໂຮງໝໍສະໜາມ ໃນເມືອງວິລະບູລີ. ໃນການພົບປະ, ທ່ານນາງ ຫຼົງທອງ ໄດ້ສະແດງຄວາມໝັ້ນໃຈຕໍ່ໂຄງການເຊໂປນໃນການຄຸ້ມຄອງ ແລະ ປ້ອງກັນບໍ່ໃຫ້ມີການແຜ່ລະບາດເພີ່ມຕື່ມ.

LXML ສືບຕໍ່ເຮັດວຽກຮ່ວມກັບອຳນາດການປົກຄອງທ້ອງຖິ່ນ ແລະ ບັນດາຜູ້ມີສ່ວນຮ່ວມຂອງລັດຖະບານ ເພື່ອຮັບປະກັນຄວາມປອດໄພຂອງພະນັກງານ, ຜູ້ຮັບເໝົາ ແລະ ຊຸມຊົນທ້ອງຖິ່ນອ້ອມຂ້າງບໍ່ຄຳ-ທອງເຊໂປນ.





# "ໂຊກ" ທ່າມກາງການລົ້ມສະຫຼາຍດ້ານເສດຖະກິດ ຈາກ COVID-19

ຜົນກະທົບດ້ານເສດຖະກິດຈາກການລະບາດຂອງພະຍາດ COVID-19 ແລະ ຈາກຄວາມພະຍາຍາມໃນການຄວບຄຸມການລະບາດດັ່ງກ່າວ ໄດ້ເພີ່ມທະວີຜົນກະທົບຕໍ່ເສດຖະກິດໃນ ໄຕມາດທີ 2 ຂອງປີ 2021 ເຊິ່ງເຫັນໄດ້ຈາກ ລາຍໄດ້ຂອງຄົວເຮືອນ ແລະ ລາຍຮັບຂອງທຸລະກິດທີ່ຫລຸດລົງຢ່າງມະຫາສານ, ອີງຕາມ ຜົນການສຳຫຼວດແບບໄວຜ່ານທາງໂທລະສັບຮອບລ່າສຸດຂອງ ທະນາຄານໂລກ.

**51%** ຂອງຜູ້ຕອບການສຳຫຼວດແມ່ນບໍ່ມີວຽກເຮັດ ແລະ ຕ້ອງໄດ້ຢຸດວຽກໃນເດືອນ ເມສາ-ພຶດສະພາ 2021.

ພ້ອມກັບ **64** ປະເທດອື່ນໆ, ທະນາຄານໂລກໄດ້ດຳເນີນການສຳຫຼວດຢູ່ ສປປ ລາວ ໃນເດືອນ ເມສາ-ພຶດສະພາ 2021 ໂດຍຄັດເລືອກແບບຊຸມ 2,000 ຄົວເຮືອນ. ຜົນການສຳຫຼວດສະແດງໃຫ້ເຫັນວ່າ:

ວຽກເຮັດງານທຳຖືກກະທົບຢ່າງກວ້າງຂວາງໃນຂະແໜງການບໍລິການ ເຊິ່ງ ບຸກຄົນຕ້ອງໄດ້ຢຸດວຽກ ຫຼື ປ່ຽນວຽກໃນໄລຍະລ໋ອກດາວ.

ຄົວເຮືອນປະມານ **43%** ໄດ້ປະສົບລາຍໄດ້ຄົວເຮືອນທີ່ຫລຸດລົງໃນເດືອນ ມີນາ 2021 ສົມທຽບໃສ່ໄລຍະກ່ອນມີການລ໋ອກດາວ.

ມາຮອດເດືອນພຶດສະພາ 2021, ຫົວ ໜ່ວຍທຸລະກິດ **5.5%** ແມ່ນໄດ້ປິດກິດຈະ ການຖາວອນ ແລະ **33%** ແມ່ນໄດ້ປິດຊົ່ວຄາວ. ໃນນັ້ນ **65%** ທີ່ຍັງດຳເນີນງານແມ່ນປະສົບກັບການຂາດລາຍຮັບ

ໃນຂະນະທີ່ຫຼາຍຄົນໄດ້ສູນເສຍວຽກຈາກ ຄື້ນທີສອງຂອງການລະບາດຂອງພະຍາດ COVID-19 ໃນປະເທດ, ຊີວິດການເປັນຢູ່ຂອງຫຼາຍຄົນກໍຖືກກະທົບເຊັ່ນດຽວກັນ. ຄືກັນກັບພວກເຮົາຫຼາຍຄົນ, ຜຽນວຽກໄດ້ມີການປັບປ່ຽນ, ເວລາທີ່ໃຊ້ກັບຄອບຄົວກໍໜ້ອຍລົງ ແລະ ກິດຈະກຳທີ່ພວກເຮົາມັກກໍໄດ້ຖືກຈຳກັດ. ແຕ່ວ່າ, ຜູ້ທີ່ຍັງມີວຽກເຮັດ ແລະ ຍັງມີລາຍໄດ້ນັ້ນ ຍັງຖືວ່າເປັນຄົນ "ໂຊກດີ" ທ່າມກາງຄວາມວຸ້ນວາຍສັບສົນຍ້ອນ COVID-19.

## ວັນສຳຄັນ ເຫດການສຳຄັນ

**1 ກຸມພາ**
ວັນຂຶ້ນປີໃໝ່ຈີນ-ຫວຽດນາມ

ລ້ານຊ້າງ ມີເນໄຣນສ໌ ລິມິເຕັດ
万象矿业有限公司
CHIFENG LXML SEPON

**1 ມີນາ**
ຄົບຮອບ 19 ປີ ການດຳເນີນງານຂອງໂຄງການຄຳ-ທອງ ເຊໂປນ

**8 ມີນາ**
ວັນແມ່ຍິງສາກົນ

# ຂ້ອຍປິ່ນປົວຫາຍດີແລ້ວ ແລະ ຂ້ອຍປອດໄພດີເດີ !

ຫວນຄືນໜຶ່ງປີຫຼັງ, ເຊື້ອພະຍາຍສາຍພັນໃໝ່ ໂຄໂຣນາໄວຣັສ ຫຼື ທີ່ເອີ້ນໃນປັດຈຸບັນ 'COVID-19' ໄດ້ເຮັດໃຫ້ທຸກຄົນຕື່ນຕົວ ວຸ້ນວາຍ ແລະ ມີຄວາມລະມັດລະວັງຫຼາຍຂຶ້ນ. ຕອນນັ້ນແມ່ນຍັງບໍ່ມີວັກຊີນປ້ອງກັນ ແລະ ເກາະປ້ອງກັນທີ່ພວກເຮົາຮູ້ກໍມີແຕ່ມາດຕະການປ້ອງກັນພື້ນຖານ. ສ່ວນຜູ້ທີ່ໄດ້ຮັບການປິ່ນປົວໃນ ສປປ ລາວ ອີງຕາມຄຳແນະນຳຂອງ ກະຊວງສາທາລະນະສຸກ ແມ່ນຈະຖືກປົດປ່ອຍອອກຈາກໂຮງໝໍ ກໍຕໍ່ເມື່ອ ໄດ້ຮັບຜົນກວດເຊື້ອແບບ PCR ເປັນລົບ 2 ຄັ້ງ ຕິດຕໍ່ກັນເທົ່ານັ້ນ.



ມາຮອດມື້ນີ້ ໜຶ່ງປີຜ່ານໄປ ພວກເຮົາມີວັກຊີນທີ່ເປັນເກາະປ້ອງກັນເສີມອີກຊັ້ນ ນອກຈາກມາດຕະການປ້ອງກັນພື້ນຖານ (ການເວັ້ນໄລຍະຫ່າງ, ການລ້າງມື, ການໃສ່ຜ້າປິດປາກ-ດັງ, ການຈຳກັດບໍລິເວນ ແລະ ການແຍກປ່ຽວ). ຍ້ອນສາຍພັນທີ່ແຜ່ໄວ ແລະ ຕິດໄວທີ່ສຸດ ຄືສາຍພັນ 'ເດວຕາ' ແລະ 'ໂອມິຄຣອນ' ທີ່ແຜ່ລາມຢ່າງກວ້າງຂວາງ, ຜູ້ໃດກໍສາມາດຕິດເຊື້ອໄດ້. ນອກຈາກນັ້ນ, ກະຊວງສາທາລະນະສຸກ ແລະ ອົງການອະນາໄມໂລກ ກໍໄດ້ທົບທວນ ຄຳແນະນຳກ່ຽວກັບການປົດປ່ອຍ ຄົນປ່ວຍ COVID-19 ອອກຈາກໂຮງໝໍ ທີ່ອີງຕາມຫຼັກຖານດ້ານວິທະຍາສາດທີ່ໜັກແໜ້ນ ຄື: "ຜູ້ປ່ວຍທີ່ໄດ້ຮັບການປິ່ນປົວ ແລະ ປົດປ່ອຍອອກຈາກໂຮງໝໍ ແມ່ນບໍ່ສາມາດ ແຜ່ເຊື້ອໃຫ້ຄົນອື່ນ ແລະ ບໍ່ຈຳເປັນຕ້ອງກວດຫາເຊື້ອອີກກ່ອນທີ່ຈະຖືກປ່ອຍອອກຈາກໂຮງໝໍ".

ຕົວຊີ້ວັດສຳຄັນທີ່ນຳໃຊ້ເພື່ອປິ່ນປົວ ແລະ ປົດປ່ອຍຄົນປ່ວຍ COVID-19 ອອກຈາກໂຮງໝໍ ແມ່ນຂຶ້ນກັບວ່າ ບຸກຄົນສະແດງອາການ ຫຼື ບໍ່, ວັນທີ່ເລີ່ມສະແດງອາການ ແລະ ມື້ສຸດທ້າຍທີ່ສະແດງອາການ.




ສະນັ້ນ, ອີງຕາມຄຳແນະນຳຂ້າງເທິງນັ້ນ, ທຸກຄົນຄວນຕ້ອນຮັບ ແລະ ໃຫ້ການສະໜັບສະໜູນ ບຸກຄົນທີ່ປິ່ນປົວຫາຍດີຈາກ COVID-19 ເຊິ່ງອາດເປັນເພື່ອນຮ່ວມງານ, ສະມາຊິກຄອບຄົວ, ໝູ່ເພື່ອນ ຫຼື ຕົວທ່ານເອງ ກໍເປັນໄດ້!

COVID-19 ໄດ້ສ້າງຄວາມຫຍຸ້ງຍາກ ແລະ ມີຜົນກະທົບຕໍ່ທຸກຄົນ ບໍ່ວ່າຈະດ້ານຮ່າງກາຍ ຫຼື ຈິດໃຈ. ພາຍຫຼັງທີ່ບຸກຄົນປະສົບກັບຄວາມເຄັ່ງຄຽດຈາກການຕິດເຊື້ອ COVID-19, ການກັບຄືນມາເຮັດວຽກກໍອາດເປັນຂັ້ນຕອນທີ່ທ້າທາຍ. ຜູ້ທີ່ຕິດເຊື້ອ, ໄດ້ຮັບການປິ່ນປົວ ແລະ ກັບຄືນສູ່ຄອບຄົວ ແລະ ເພື່ອນຮ່ວມງານຂອງຕົນ ອາດມີຄວາມຮູ້ສຶກກັງວົນ ວ່າຈະບໍ່ຖືກຍອມຮັບ ແລະ ຖືກແບ່ງແຍກເຊິ່ງຍິ່ງທັບຖົມທະວີຄູນຜົນກະທົບຈາກ COVID-19.

ສະນັ້ນ, ຖ້າທ່ານມີສະມາຊິກຄອບຄົວ, ໝູ່ເພື່ອນ ຫຼື ເພື່ອນຮ່ວມງານທີ່ກັບຄືນມາເຮືອນ ຫຼື ຫ້ອງການ, ຈົ່ງເປີດອ້ອມແຂນຮັບ ແລະ ໃຫ້ຄວາມຊ່ວຍເຫຼືອເຂົາເຈົ້າຢ່າງອົບອຸ່ນ!






# LXML ສະໜັບສະໜູນ ໂຮງໝໍ ພາກສະໝາມ ແຂວງສະຫວັນນະເຂດ

**ພຶດສະພາ 2021** - LXML ໄດ້ປະກອບສ່ວນເປັນເງິນຈຳນວນ 116.115.000 ກີບ ໃຫ້ແກ່ ພະແນກສາທາລະນະສຸກແຂວງສະຫວັນນະເຂດ ເພື່ອກໍ່ສ້າງຫ້ອງນ້ຳ-ຫ້ອງອາບນ້ຳ ເພື່ອຮອງຮັບຄົນມາປິ່ນປົວ COVID-19. ຫ້ອງນ້ຳໃໝ່ນີ້ ຈະຮັບປະກັນມາດຕະຖານດ້ານສຸຂະອະນາໄມ ສຳລັບບຸກຄົນທີ່ເຂົ້າຮັບການປິ່ນປົວພະຍາດ COVID-19 ຢູ່ ໂຮງໝໍພາກສະໝາມທີ່ຕັ້ງຢູ່ ໂຮງຮຽນວິທະຍາໄລວິທະຍາສາດ ສຸຂະພາບ ສະຫວັນນະເຂດ.

ທ່ານ ສະໝານ ອະເນກາ, ຮອງຜູ້ຈັດການໃຫຍ່ ໄດ້ກ່າວວ່າ: *"ພວກເຮົາຮັບຮູ້ວ່າ ສຸຂະອະນາໄມ ເປັນມາດຕະການພື້ນຖານສຳຄັນອັນໜຶ່ງໃນການປ້ອງກັນ COVID-19. ທາງບໍລິສັດຫວັງວ່າ ການຊ່ວຍເຫຼືອຂອງພວກເຮົາຄັ້ງນີ້ ຈະສະໜອງສະຖານທີ່ອຳນວຍຄວາມສະດວກທີ່ສະອາດສຳລັບຜູ້ທີ່ໄປຮັບການປິ່ນປົວພະຍາດ COVID-19. LXML ສືບຕໍ່ຮ່ວມມືກັບ ແຂວງສະຫວັນນະເຂດ ແລະ ເມືອງວິລະບູລີ ໃນການຮັບມືກັບ ຄື້ນທີສອງຂອງການລະບາດນີ້."*

ພິທີມອບຮັບແມ່ນໄດ້ຈັດຂຶ້ນທີ່ ພະແນກສາທາລະນະສຸກແຂວງສະຫວັນນະເຂດ. ໃຫ້ກຽດຮັບການຊ່ວຍເຫຼືອຄັ້ງນີ້ ໂດຍ ດຣ ແສງດາວ ສີດາໄລ, ຫົວໜ້າພະແນກສາທາລະນະສຸກແຂວງ ແລະ ມອບໂດຍທ່ານນາງ ລັດສະນີ ສີສານ, ຫົວໜ້າສາຍງານພົວພັນກັບລັດຖະບານຂອງ LXML, ພາຍໃຕ້ການເປັນສັກຂີພິຍານຂອງ ຫົວໜ້າຂະແໜງຄຸ້ມຄອງບໍລິຫານພິທີການ ແລະ ການເງິນ ຫ້ອງວ່າການແຂວງ, ອຳນວຍການໂຮງໝໍແຂວງສະຫວັນນະເຂດ ແລະ ອຳນວຍການວິທະຍາໄລວິທະຍາສາດສຸຂະພາບສະຫວັນນະເຂດ.

ໂຮງໝໍພາກສະໝາມ ແຂວງສະຫວັນນະເຂດ ສາມາດຮອງຮັບ 160 ຕຽງ.

ໃນເດືອນ ເມສາ 2021, LXML ຍັງໄດ້ມອບ US$100.000 ໃຫ້ແກ່ລັດຖະບານລາວ ເພື່ອສະໜັບສະໜູນວຽກງານຮັບມືກັບການລະບາດພະຍາດ COVID-19 ໃນ ສປປ ລາວ. ອີກ 60.000.000 ກີບ ແມ່ນໄດ້ມອບໃຫ້ແກ່ ໜ່ວຍກູ້ໄພທີ່ນະຄອນຫຼວງວຽງຈັນ ແລະ ສະຫວັນນະເຂດເພື່ອສະໜັບສະໜູນຄວາມອາດສາມາດໃນການຮັບມືເຫດສຸກເສີນ ໃນໄລຍະນີ້.





# ຈະເວົ້າແນວໃດ ໃຫ້ເພື່ອນຮ່ວມ ງານ ໃສ່ຜ້າປິດປາກ-ດັງ?



ຕັ້ງແຕ່ພະຍາດ COVID-19 ໄດ້ເຂົ້າມາໃນຊີວິດຂອງພວກເຮົາທຸກຄົນຕັ້ງແຕ່ປີ 2020, ພວກເຮົາກໍໄດ້ຍິນແລ້ວຍິນອີກວ່າ "ຜ້າປິດປາກ-ດັງ ແມ່ນມາດຕະການສຳຄັນໃນການຄວບຄຸມການແຜ່ເຊື້ອ ແລະ ໃນການປົກປ້ອງຊີວິດ."

ການໃສ່ຜ້າປິດປາກ-ດັງໄດ້ກາຍເປັນວິຖີ-ຄວາມນິຍົມໃໝ່ໃນການນຸ່ງຖື (ແຟຊັ້ນ). ແຕ່ວ່າ, ບາງຄົນກໍບໍ່ຍອມໃສ່ຜ້າປິດປາກ-ດັ່ງຍ້ອນຫຼາຍເຫດຜົນ ເປັນຕົ້ນຍ້ອນໃສ່ແລ້ວເຮັດໃຫ້ຜິວແພ້-ລະຄາຍເຄືອງ ແລະ ຫາຍໃຈບໍ່ສະດວກສະບາຍ.

ທ່ານເຄີຍຕົກຢູ່ໃນສະພາບຍາກໃຈທີ່ຕ້ອງໄດ້ຂໍໃຫ້ຜູ້ໃດຜູ້ໜຶ່ງໃສ່ຜ້າປິດປາກ-ດັງຢູ່ບ່ອນເຮັດວຽກບໍ່? ເປັນການປະຕິເສດບໍ່ໄດ້ວ່າ ການໃສ່ຜ້າປິດປາກ-ດັງນັ້ນໄດ້ກາຍມາເປັນປະເດັນດ້ານຄຸນນະທຳ ແລະ ການເມືອງ ເຮັດໃຫ້ການສົນທະນາໃນຫົວຂໍ້ນີ້ ສະຫຼັບຊັບຊ້ອນບໍ່ງ່າຍດັ່ງທີ່ຄິດ. ຕໍ່ໄປນີ້ແມ່ນຄຳແນະນຳ 3 ຂໍ້ ໃນການຂໍໃຫ້ເພື່ອນຮ່ວມງານໃສ່ຜ້າປິດປາກ-ດັງໃຫ້ໄດ້ຜົນ:

- **ກຽມພ້ອມ.** ຖ້າທ່ານໄດ້ກະກຽມ ແລະ ຮູ້ວ່າຈະເວົ້າຫຍັງລ່ວງໜ້າແລ້ວ, ເມື່ອ ມີເພື່ອນຮ່ວມງານທີ່ບໍ່ໃສ່ຜ້າປິດປາກ-ດັງຍ່າງເຂົ້າມາຫາທ່ານ ນັ້ນການຂໍໃຫ້ເພື່ອນຮ່ວມງານທ່ານໃສ່ຜ້າປິດ-ປາກດັງກໍຈະງ່າຍຂຶ້ນ ເພາະທ່ານບໍ່ຕ້ອງຊອກຫາຄຳເວົ້າທີ່ເໝາະສົມ ເຊິ່ງ ນະຕອນນັ້ນທ່ານອາດຄິດບໍ່ອອກ.
- **ກ່າວຄຳຂໍໂດຍບໍ່ເຮັດໃຫ້ບຸກຄົນເສຍໜ້າ.** ການຂໍຮ້ອງນີ້ ບໍ່ຄວນສື່ເຖິງການແບ່ງແຍກ-ປະຕິເສດ, ແຕ່ຄວນເປັນການຂໍຄວາມຮ່ວມມື. ເວົ້າລວມ, ຄຳເວົ້າຂອງທ່ານຄວນສື່ວ່າ: "ເຈົ້າບໍ່ໄດ້ເຮັດຫຍັງຜິດ. ເຮົາບໍ່ມີຂໍ້ຂ້ອງໃຈຕໍ່ກັນ. ແຕ່ຂ້ອຍຂໍໃຫ້ເຈົ້າໃສ່ຜ້າປິດປາກດັງນີ້ໃຫ້ແດ່."
- **ເວົ້າກົງໄປກົງມາ.** ການຮ້ອງຂໍໂດຍກົງ ໂດຍບໍ່ຕ້ອງເວົ້າອ້ອມໆ ຈະເປັນວິທີທາງທີ່ໄດ້ຜົນທີ່ສຸດ ເພື່ອໃຫ້ເພື່ອນຮ່ວມງານຂອງທ່ານປະຕິບັດຕາມ.

*ຄັດຈາກ "ວິທີການຂໍໃຫ້ເພື່ອນຮ່ວມງານໃສ່ຜ້າປິດປາກ-ດັງ", HBR*

# ຄະນະສະເພາະກິດ ໂຄວິດ-19 ເຊໂປນ ເພີ່ມການເຝົ້າລະວັງໃນພາກສະໜາມ

*ບົດປະກອບສ່ວນໂດຍ: ສົມຊາຍ ວິໄລສັກ, ທີ່ປຶກສາອາວຸໂສ – ປັບປຸງຄວາມປອດໄພ*

**ໃນເດືອນທັນວາ 2021,** ເມືອງວິລະບູລີ ມີການລາຍງານ 17 ກໍລະນີຕິດເຊື້ອ COVID-19 ໃນເຂດບ້ານບຸ່ງຄຳ, ແກ້ງເຕົ່າ ແລະ ນ້ຳຈະໂລະ ຊຶ່ງລວມເປັນ 62 ກໍລະນີຕິດເຊື້ອສະສົມທັງໝົດ.




ເນື່ອງຈາກຄວາມສ່ຽງທີ່ເກີດຂຶ້ນໃນຊຸມຊົນ, ຄະນະສະເພາະກິດ COVID-19 ຂອງໂຄງການເຊໂປນ ຈຶ່ງໄດ້ຮັບການຮື້ຟື້ນຄືນໃໝ່ ເພື່ອຈັດຕັ້ງປະຕິບັດ ແລະ ຕິດຕາມ ມາດຕະການປ້ອງກັນ ແລະ ຄວບຄຸມການແຜ່ລະບາດຂອງພະຍາດ COVID-19. ທີມງານໄດ້ເນັ້ນໜັກໃສ່ການປະຕິບັດມາດຕະການທີ່ສອດຄ່ອງຢ່າງເຄັ່ງຄັດ ໃນພາກສະໜາມ, ສະຖານທີ່ພັກທີ່ຄວບຄຸມໂດຍ LXML ແລະ ພາຫະນະການເດີນທາງ. ຄະນະສະເພາະກິດໄດ້ລົງກວດກາ ເຂດທີ່ມີຄວາມສ່ຽງສູງ 2 ຄັ້ງຕໍ່ອາທິດ ແລະ ຮັບປະກັນວ່າ ທຸກຄົນປະຕິບັດຕາມ ກົດລະບຽບ ເພື່ອຄວາມປອດໄພຂອງພະນັກງານ, ຜູ້ຮັບເໝົາ ແລະ ຊຸມຊົນຂອງພວກເຮົາ.

ຄະນະສະເພາະກິດ COVID-19 ໂຄງການເຊໂປນ ໄດ້ຮັບການສ້າງຕັ້ງຂຶ້ນໃນປີ 2020 ນີ້ ເມື່ອພາກສະໜາມເຊໂປນໄດ້ເຂົ້າສູ່ວາລະການລ໋ອກດາວ ເພື່ອຮັບມືກັບຄື້ນການລະບາດຮອບທຳອິດ. ຄະນະສະເພາະກິດໄດ້ ຕິດຕາມເຫດການ ແລະ ການລະບາດ ເພື່ອນຳສະເໜີການປະຕິບັດມາດຕະການປ້ອງກັນການແຜ່ລະບາດຂອງເຊື້ອພະຍາດ. ຄະນະສະເພາະກິດ ໄດ້ປັບປຸງການປູກຈິດສຳນຶກ ກ່ຽວກັບ ພະຍາດ COVID-19 ໃຫ້ແກ່ພະນັກງານ, ຜູ້ຮັບເໝົາ ແລະ ຊຸມຊົນ.

ຄະນະສະເພາະກິດ ມີອຳນາດໃນການສອບຖາມ ເພື່ອຫາຫຼັກຖານ ແລະ ລາຍງານການລະເມີດ. ສະມາຊິກໄດ້ເຮັດວຽກຢ່າງໃກ້ຊິດກັບທີມງານຮັກສາຄວາມສະຫງົບ ແລະ ເຈົ້າໜ້າທີ່ຕຳຫຼວດ ເພື່ອປ້ອງກັນ ແລະ ລາຍງານການລະເມີດກົດຂອງພາກສະໜາມ ແລະ ຂໍ້ແນະນຳ ແລະ ກົດລະບຽບຂອງລັດຖະບານ.

ຈຶ່ງໃຫ້ການຮ່ວມມືກັບຄະນະສະເພາະກິດ ເພື່ອຮັບປະກັນໃຫ້ທຸກຄົນປອດໄພຈາກພະຍາດ COVID-19.





# ບິນສູງ: ມາພົບກັບ ນັກບິນໂດຣນຂອງ LXML

ໂດຣນທັນສະໄໝທຳອິດຂອງໂລກ – ຫຼື ພາຫະນະທາງອາກາດທີ່ບໍ່ມີຄົນນັ່ງຂັບ – ໄດ້ຖືກສ້າງຂຶ້ນໃນປີ 1935 ເພື່ອຝຶກອົບຮົມນັກບິນ. ຕັ້ງແຕ່ນັ້ນມາ, ໂດຣນ ໄດ້ຖືກນຳໃຊ້ໃນຫຼາກຫຼາຍອຸດສາຫະກຳນັບແຕ່ ການທະຫານ, ກະສິກຳ, ການບັນເທີງ ຕະຫຼອດຮອດ ບໍ່ແຮ່.

ທີ່ LXML, ພວກເຮົານຳໃຊ້ ໂດຣນ ເພື່ອຊ່ວຍໃຫ້ພວກເຮົາບັນລຸເປົ້າໝາຍການຂຸດຄົ້ນບໍ່ແຮ່ ແລະ ທັງຮັກສາຄວາມປອດໄພຂອງພະນັກງານ ກໍຄືຊຸມຊົນ. ໂດຣນ ເປັນເຄື່ອງມືດີເລີດເພື່ອບັນລຸວຽກງານ ການວາງແຜນການຂຸດຄົ້ນ, ດ້ານການດຳເນີນງານ, ດ້ານສິ່ງແວດລ້ອມ ແລະ ວຽກງານຊຸມຊົນ.

ໂດຣນ ຈະໃຫ້ພາບທີ່ກວ້າງໄກຈາກລະດັບສູງທາງອາກາດ ໃຫ້ພວກເຮົາເຫັນ ຮ່ອງຮອຍທີ່ຖືກລົບກວນ ແລະ ຊ່ວຍໃຫ້ພວກເຮົາເຂົ້າເຖິງເຂດຫ່າງໄກສອກຫຼີກ.

LXML ມີພະນັກງານ 24 ຄົນຈາກທີມງານ ຂຸດຄົ້ນບໍ່ແຮ່, ສິ່ງແວດລ້ອມ, ແລະ ພົວພັນກັບຊຸມຊົນ ເຊິ່ງໃນນັ້ນມີແມ່ຍິງ 3 ຄົນ ທີ່ສາມາດບິນໂດຣນເພື່ອຮັບໃຊ້ວຽກງານປະຈຳວັນຂອງພວກເຮົາ.ເຮົາມາພົບກັບ ກັບຕັນບິນໂດຣນ ຂອງ LXML ທັງ 3 ທ່ານ ພ້ອມທັກສະຂອງພວກເຂົາ.



**ຈັນທະວີ ອິນທະສຸກ,** **ວິສະວະກອນ ດ້ານການຊີເຈາະ ແລະ ລະເບີດຫີນ, ຈາກ ນະຄອນຫຼວງວຽງຈັນ**

ຈັນທະວີ ເປັນແມ່ຍິງຜູ້ດຽວໃນສະມາຊິກ 5 ຄົນຂອງທີມງານຊີເຈາະ ແລະ ລະເບີດຫີນ. ລາວໄດ້ເລີ່ມເຮັດວຽກກັບ LXML ໃນເດືອນ ເມສາ 2020.

*"ຂ້າພະເຈົ້າໄດ້ຝຶກບິນໂດຣນ ເປັນເວລາໜ 1 ອາທິດ ແລະ ບິນມາໄດ້ 1 ປີພໍດີ. ການບິນໂດຣນ ທີ່ທ້າທາຍເປັນພິເສດແມ່ນຕອນບິນໃນລະດູຝົນ, ການບິນຢູ່ເຂດພູສູງ ແລະ ເວລາສັນຍານຕັດ ລະຫວ່າງໂດຣນ ແລະ ເຄື່ອງຄວບຄຸມ!"*

**ບຸນຕ້ອນ ສິດທິເດດ,** **ພະນັກງານໄກ່ເກ່ຍ ແລະ ມໍລະດົກວັດທະນະທຳ, ຈາກ ເມືອງວິລະບູລີ**



ບຸນຕ້ອນ ເປັນແມ່ຍິງຜູ້ດຽວໃນສະມາຊິກ 4 ຄົນຂອງ ທີມງານພົວພັນກັບຊຸມຊົນທີ່ສາມາດບິນໂດຣນ.

*"ຂ້າພະເຈົ້າໄດ້ຝຶກບິນໂດຣນ ເປັນເວລາ 1 ເດືອນ ແລະ ບິນມາໄດ້ 6 ເດືອນພໍດີ. ຂ້າພະເຈົ້າບິນໂດຣນເພື່ອໃຫ້ໄດ້ພາບຊັດເຈນ ຂອງພື້ນທີ່ໆອາດໄດ້ຮັບຜົນກະທົບຈາກໂຄງການຂອງພວກເຮົາ ເຊັ່ນ ໜອງປາ ແລະ ດິນນາຂອງຊຸມຊົນ. ຂ້າພະເຈົ້າຄິດວ່າ ສິ່ງທີ່ສຳຄັນຫຼາຍສຳລັບຜູ້ທີ່ບິນໂດຣນ ແມ່ນຕ້ອງມີສະມາທິສູງ ແລະ ມີໄຫວພິບວ່ອງໄວເວລາບິນໃນພື້ນທີ່ຫຍຸ້ງຍາກກັນດານເປັນຕົ້ນຢູ່ເຂດພູຄ້ອຍຊັນ."*

**ບົວຜັນ ພຽນອາສາ,** **ວິສະວະກອນ – ປັບປຸງການຂຸດຄົ້ນແຮ່, ຈາກ ນະຄອນຫຼວງວຽງຈັນ**

ບົວຜັນ ເປັນແມ່ຍິງຜູ້ດຽວໃນສະມາຊິກ 5 ຄົນ ຂອງທີມງານຂຸດຄົ້ນບໍ່ແຮ່ ທີ່ສາມາດບິນໂດຣນ.

*"ຂ້າພະເຈົ້າໄດ້ຝຶກບິນໂດຣນ ເປັນເວລາ 2 ອາທິດ ແລະ ໄດ້ເລີ່ມບິນໃນຕົ້ນເດືອນ ພຶດສະພາທີ່ຜ່ານມານີ້. ຂ້າພະເຈົ້າເຫັນວ່າ ເວລາທີ່ບິນໂດຣນທີ່ເໝາະສົມທີ່ສຸດແມ່ນຫລັງຈາກ 10 ໂມງເຊົ້າ ເມື່ອແສງພໍດີງາມ ແລະ ໃນເວລາທີ່ບໍ່ມີລົມ. ພະແນກຂອງພວກເຮົານຳໃຊ້ ໂດຣນສຳລັບຫຼາຍໜ້າວຽກເປັນຕົ້ນເພື່ອ ກວດກາກິດຈະກຳຊີເຈາະ ແລະ ລະເບີດຫີນ, ເກັບພາບຄວາມຄືບໜ້າຂອງວຽກງານຂຸດຄົ້ນແຮ່ໃນແຕ່ລະບໍ່ ແລະ ໃນແຕ່ລະໄລຍະເວລາຂອງກິດຈະກຳການພັດທະນາ. ການບິນໂດຣນ ເຮັດໃຫ້ເຮົາເຫັນມຸມມອງທີ່ດີໃນການດຳເນີນງານຂອງພວກເຮົາ ເພື່ອໃຫ້ໄດ້ມີຂໍ້ມູນເລິກເຊິ່ງຂຶ້ນຕື່ມ. ໂດຣນ ຈະໃຫ້ພາບທີ່ກວ້າງໄກຈາກຫຼາກຫຼາຍມູມ ທີ່ສາມາດຊ່ວຍໃຫ້ພວກເຮົາສາມາດວາງແຜນ ແລະ ຕັດສິນໃຈໄດ້ເລິກເຊິ່ງຮອບດ້ານຂຶ້ນ."*





# ວາງເປົ້າໝາຍ ເພື່ອການດຳເນີນງານ ທີ່ເປັນເລີດ

**19 ພະຈິກ 2021** - ຄະນະຜູ້ບໍລິຫານ LXMLໄດ້ຈັດກອງປະຊຸມ ວາງແຜນທຸລະກິດ ເພື່ອທົບທວນການດຳເນີນງານໃນປີ 2021 ແລະ ວາງແຜນສຳລັບປີ 2022. ທ່ານ ພໍ ແຮຣິສ ໄດ້ສະຫຼຸບການດຳເນີນງານໃນໄລຍະ 3 ປີ ຂອງ ບໍລິສັດ ຊີເຟີງ. ຜົນຂອງກອງປະຊຸມ ຈະໄດ້ນຳໄປຜັນຂະຫຍາຍເພື່ອພັດທະນາແຜນທຸລະກິດ ຂອງແຕ່ລະພະແນກການ ແລະ ຄຳໝັ້ນໝາຍ ຂອງຂ້າພະເຈົ້າ (My Commitments) ຂອງ ພະນັກງານແຕ່ລະຄົນ.

ດ້ວຍມາດຕະຖານ ແລະ ປະສິດທິພາບໃນການດຳເນີນງານດ້ານຄວາມປອດໄພ ແລະ ສິ່ງແວດລ້ອມລະດັບໂລກຂອງໂຄງການເຊໂປນ, ບໍລິສັດ ຊີເຟີງ ວາງເປົ້າໝາຍໃນການຂະຫຍາຍທຸລະກິດ ດ້ວຍການເຂົ້າຊື້ກິດຈະການ ຫຼື ຮ່ວມຮຸ້ນ ໃນສປປ ລາວ, ແລະ/ຫຼື ຂົງເຂດໃດໜຶ່ງໃນອາຊີຕາເວັນອອກສ່ຽງໄຕ້.

ຄວາມປອດໄພ: LXML ບັນລຸອັດຕາຄວາມຖີ່ການເກີດບາດເຈັບທີ່ສາມາດບັນທຶກໄດ້ຕໍ່ໜຶ່ງລ້ານຊົ່ວໂມງໃນການເຮັດວຽກ (TRIFR) ທີ່ 0,78, ດີກວ່າເປົ້າໝາຍຂອງປີ 2021 ທີ່ 0,79 ໂດຍທີ່ປາສະຈາກເຫດການເສຍຊີວິດ ຫຼື ເຫດການທີ່ມີຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມ ຊຶ່ງຖືວ່າເປັນຜົນສຳເລັດທີ່ພົ້ນເດັ່ນ ເຖິງວ່າຈະໄດ້ຮັບຜົນກະທົບຈາກພະຍາດ COVID-19, ຈຳນວນພະນັກງານຜູ້ຮັບເໝົາ ແລະ ຄວາມທ້າທາຍອື່ນໆ. ພວກເຮົາໄດ້ບັນທຶກເຫດການບາດເຈັບມື ແລະ ເຫດການທີ່ມີຄວາມສ່ຽງສູງອື່ນໆຈຳນວນໜຶ່ງ ແລະ ພວກເຮົາມຸ່ງໝັ້ນໃນການປັບປຸງໃຫ້ດີຂຶ້ນ. ໃນປີ 2022, ພວກເຮົາວາງເປົ້າໝາຍ ໃນການບັນລຸ TRIFR ທີ່ 0.64 (10% ຕ່ຳກວ່າປີ 2021) ແລະ ປູກຈິດສຳນຶກດ້ານຄວາມປອດໄພເຂົ້າໃນທຸກສິ່ງທີ່ພວກເຮົາຈະເຮັດ.

LXML ສ້າງສະຖິຕິການຜະລິດແຮ່ 36% ລື່ນແຜນງົບປະມານ (41,3 ລ້ານໂຕນ), ການດຳເນີນງານທີ່ເຂັ້ມແຂງໃນລະດູຝົນ, ແລະ ການຈັດຕັ້ງປະຕິບັດໂຄງການພັດທະນາບໍ່ຢ່າງວ່ອງໄວ. ແຕ່ວ່າ ພວກເຮົາກໍ່ຍັງພົບກັບສິ່ງທີ່ທ້າທາຍ ບໍ່ວ່າຈະເປັນຜົນການດຳເນີນງານຂອງກົນຈັກທີ່ຕ່ຳ, ນ້ຳຖ້ວມບໍ່ DSCW4, ແລະ ການຄຸ້ມຄອງຜູ້ຮັບເໝົາ ແລະ ກົນຈັກທີ່ກ່ຽວຂ້ອງ. ໃນປີ 2022, ພວກເຮົາວາງເປົ້າໝາຍການຜະລິດແຮ່ ທີ່ 40,6 ລ້ານໂຕນ.

LXML ພົບບັນຫາການຜະລິດທີ່ຫຼຸດຄາດຢ່າງຫຼວງຫຼາຍ (22% ຕ່ຳກວ່າເປົ້າໝາຍ). ພວກເຮົາວາງເປົ້າໝາຍໃນການຜະລິດຄຳປະມານ 5,8 ໂຕນ ພາຍໃນທ້າຍປີນີ້ (ທຽບໃສ່ການຄາດຄະເນ 7,6 ໂຕນ). ຜົນກະທົບຕໍ່ການຜະລິດເກີດຈາກຄວາມຫຼ້າຊ້າໃນການກໍ່ສ້າງ ແລະ ບັນຫາທີ່ຕໍ່ເນື່ອງຂອງໂຮງງານອົກຊີເຈັນ, ປະສິດທິພາບຂອງຮູບແບບຊັບພະຍາກອນທີ່ຕ່ຳ ເຮັດໃຫ້ຄຸນນະພາບຂອງແຮ່ຕ່ຳກວ່າເປົ້າໝາຍທີ່ຄາດໄວ້, ແຮ່ທີ່ສັບປົນ ແລະ ແຂງ ເຮັດໃຫ້ມີຜົນກະທົບຕໍ່ການສະກັດແຮ່, ແລະ ຜົນກະທົບການພະຍາດ COVID-19 ທີ່ກ່ຽວຂ້ອງກັບຂໍ້ຈຳກັດໃນການເດີນທາງ, ຜຽນວຽກທີ່ຍາວນານຂຶ້ນ, ແລະ ຄວາມອິດເມື່ອຍ. ແຕ່ພວກເຮົາສາມາດບັນລຸ ສະຖິຕິການໂມ້ແຮ່ (2 ລ້ານໂຕນ ທຽບໃສ່ 1,5 ລ້ານໂຕນ), ອັດຕາການປ້ອນແຮ່ເຂົ້າສູ່ POX ສູງກວ່າ 60 ໂຕນຕໍ່ຊົ່ວໂມງ, ປັບປຸງການສະກັດແຮ່ຈາກໂຮງງານຟູລອຍ 16%, ການຜະລິດແຮ່ຜຸພັງ ສູງກວ່າແຜນງົບປະມານ 20%, ແລະ ຫຼາຍໂຄງການລິເລີ່ມໃນໂຮງງານ. ໃນປີ 2022, LXML ວາງເປົ້າໝາຍການຜະລິດຄຳປະມານ 6,72 ໂຕນ.

ໃນປີ 2021, LXML ຄາດວ່າຈະໄດ້ຮັບກຳໄລສຸດທິປະມານ US$29 ລ້ານ. ແຕ່ວ່າ, ພາຍໃຕ້ລາຍຮັບສຸດທິທີ່ US$364 ລ້ານ ທຽບໃສ່ ລາຍຮັບສູດທິທີ່ວາງໄວ້ ທີ່ US$462 ລ້ານ ແລະ ພ້ອມທັງລາຍຈ່າຍຕົ້ນທຶນ US$127 ລ້ານ, LXML ພົບກັບບັນຫາຂາດສະພາບຄ່ອງດ້ານກະແສເງິນສົດ US$110 ລ້ານ. ການຂາດສະພາບຄ່ອງກະແສເງິນສົດ ໃນປີ 2021 ນີ້ ເຮັດໃຫ້ເກີດສະພາວະຄວາມກົດດັນຢ່າງໃຫຍ່ຫຼວງຕໍ່ທຸລະກິດຂອງພວກເຮົາ. ໃນປີ 2022 ຈະພົບຄວາມທ້າທາຍຫຼາຍກວ່າເກົ່າ ເນື່ອງຈາກການເພີ່ມຂຶ້ນຂອງຄ່າໃຊ້ຈ່າຍ ແລະ ຄວາມທ້າທາຍໃນການຜະລິດຢ່າງຕໍ່ເນື່ອງ.

ທ່ານ ຝູ ເຊຍເຊີນ ກ່າວວ່າ "ບູລິມະສິດຂອງພວກເຮົາ ກໍ່ຄື ການເຮັດໃຫ້ລາຍຈ່າຍຕົ້ນທຶນ ແລະ ການດຳເນີນງານໃຫ້ຕ່ຳລົງ, ຄຽງຄູ່ກັບການປັບປຸງການສະກັດແຮ່". ທ່ານກ່າວຕື່ມອີກວ່າ "ບໍລິສັດ ຊີຟີງ ໄດ້ສະໜັບສະໜູນດ້ານການເງິນໃຫ້ແກ່ ໂຄງການເຊໂປນ ເພື່ອຮັກສາສະຖຽນລະພາບໃນການດຳເນີນງານ ແລະ ສ້າງໂຮງງານໃໝ່. ພວກເຮົາຈະຕ້ອງຮັດສາຍແອວ ແລະ ປັບສົມດຸນດ້ານກະແສເງິນສົດ ເພື່ອບັນລຸເປົ້າໝາຍ."

LXML ຈະຕ້ອງເລີ່ມການຂຸດຄົ້ນແຮ່ໃຕ້ດິນ, ຊຶ່ງຄາດວ່າຈະເລີ່ມຕົ້ນໃນກາງປີ 2023. ໄດ້ວາງງົບປະມານUS$28 ລ້ານ ສຳລັບວຽກງານສຳຫຼວດໃນໄລຍະ 3 ປີຂ້າງໜ້າ. ໃນເວລາດຽວກັນ ການເຂົ້າຊື້ກິດຈະການໃນລະດັບຂັ້ນທ້ອງຖິ່ນ ແລະ ພາກພື້ນ ຈະຊ່ວຍສະໜັບສະໜູນ ແລະ ຂະຫຍາຍໂຄງການເຊໂປນ, ແລະ ຢັ້ງຢືນສະຖານະຂອງບໍລິສັດ ຊີເຟີງ ໃນສປປ ລາວ ວ່າເປັນຄູ່ຮ່ວມທຸລະກິດທີ່ເຂັ້ມແຂງ.

ໃນປີ 2022, ບໍລິສັດ ຊີເຟີງ ຈະລົງທຶນ ປະມານ US$32 ລ້ານ ໃນໂຄງການຕົ້ນທຶນ ລວມມີ ການສະກັດຄຳແບບແຟລໂຟເທຊັ້ນ, ຖັງສະກັດແຮ່ດ້ວຍກາກບອນ ສຳລັບນ້ຳເປື່ອຍແຮ່ຮ້ອນ ແລະ ຫາງແຮ່, ອ່າງນ້ຳຫາງແຮ່, ການອ່ວາຍແລວນ້ຳກອກ, ແລະ ໂຄງລ່າງພື້ນຖານຂອງບໍ່ດິສໂຄເວີຣີດີບ.

ທ່ານ ຄາຣ ເບເກີ້ ດູລີ້ ກ່າວວ່າ: *"ການດຳເນີນງານທີ່ເປັນເລີດ ແມ່ນກ່ຽວກັບ ນະວັດຕະກຳ ແລະ ການແກ້ໄຂຂໍ້ຈຳກັດຕ່າງໆ ໃຫ້ງ່າຍດາຍເທົ່າທີ່ຈະເປັນໄປໄດ້". ທ່ານກ່າວຕື່ມອີກວ່າ "ກ່ອນອື່ນຕ້ອງເຮັດໃຫ້ຖືກຕ້ອງ ແລະ ທຸກໆຄັ້ງ (ຄຸນນະພາບ), ຫຼັງຈາກນັ້ນແມ່ນເຮັດໃຫ້ໄວຂຶ້ນ (ຄວາມໄວ). ສຸດທ້າຍ ເຮັດໃຫ້ສະຫຼາດກວ່າເກົ່າ (ຫັນການປ່ຽນແປງ)."*

ແຕ່ລະພະແນກ ຈະສະຫຼຸບແຜນທຸລະກິດຂອງຕົນ ເພື່ອໃຫ້ສອດຄ່ອງກັບ ແຜນ 3 ປີ ຂອງບໍລິສັດ ຊີເຟີງ, ແລະ ເປົ້າໝາຍຂອງ LXML ໃນປີ 2022.

ທ່ານ ພໍ ແຮຣິສ ກ່າວວ່າ: *"ໃນການວາງແຜນຂອງພວກເຮົາ, ພວກເຮົາຈະຕ້ອງວາງບູລິມະສິດໃນສິ່ງທີ່ສຳຄັນຈຳເປັນ ຈາກຊັບພະຍາກອນທີ່ເຮົາມີຢູ່ໃນມື". ທ່ານກ່າວຕື່ມອີກວ່າ: "ນີ້ເປັນສິ່ງທີ່ສຳຄັນຕໍ່ກັບອະນາຄົດຂອງໂຄງການເຊໂປນ ໃນການສືບຕໍ່ຜົນຜະລິດທີ່ໝັ້ນຄົງດ້ວຍຄວາມປອດໄພ ໃຫ້ແກ່ບັນດາຜູ້ມີສ່ວນຮ່ວມທັງໝົດ".*

**ສິ່ງສຳຄັນທີ່ໜ້ອຍ, ກົດ 80/20 -** ການຈັດບູລິມະສິດໜ້າວຽກສຳຄັນເພື່ອໃຫ້ນຳໄປສູ່ ໝາກຜົນດີທີ່ສຸດແມ່ນຈະເຮັແນວໃດດີ?

**ທິດສະດີ 'ສິ່ງສຳຄັນທີ່ມີໜ້ອຍ' ແມ່ນຫຍັງ?** ທີ່ຮູ້ກັນວ່າ ເປັນກົດ 80/20, ທິດດີສະ 'ສິ່ງສຳຄັນທີ່ມີໜ້ອຍ' ໄດ້ກ່າວວ່າ ພວກເຮົາສາມາດບັນລຸຜົນສຳເລັດທີ່ດີດ້ວຍການສຸມໃສ່ ໜ້າວຽກທີ່ສຳຄັນທີ່ສຸດທີ່ນຳໄປສູ່ຜົນຮັບທີ່ພວກເຮົາຕ້ອງການ; ຫຼື ໃນທາງກົງກັນຂ້າມ ແມ່ນ ບໍ່ໃຫ້ສຸມໃສ່ໜ້າວຽກທີ່ບໍ່ສຳຄັນ ຫຼື ໝາກຜົນທີ່ບໍ່ຕ້ອງການ. ຖ້າຄິດເປັນຕົວເລກກໍໝາຍຄວາມວ່າ ພວກເຮົາຄວນສຸມໃສ່ 20% ຂອງໜ້າວຽກທີ່ຈະນຳໄປສູ່ 80% ຂອງຜົນຮັບ.

**ພວກເຮົາສາມາດນຳມາປະຕິບັດໃນຕົວຈິງແນວໃດ?** ໃຫ້ທ່ານຖາມຕົວເອງ: 20% ຂອງໜ້າວຽກໃດ ທີ່ຈະນຳໄປສູ່ 80% ຂອງໝາກຜົນທີ່ທ່ານຕ້ອງການ ແລະ ຂ້ອຍຈະເຮັດແນວໃດເພື່ອຈະໄດ້ສຸມເວລາເຮື່ອແຮງລົງໃສ່ສິ່ງເຫຼົ່ານີ້? ໃນທາງກົບກັນຂ້າມ, 80% ຂອງໜ້າວຽກໃດທີ່ສ້າງບັນຫາ ແລະ ຄວາມເຄັ່ງຄຽດແຕ່ຜັດນຳໄປສູ່ພຽງ 20% ຂອງຜົນຮັບ ແລະ ຂ້ອຍຈະລົບລ້າງບັນຫາເຫຼົ່ານີ້ໃຫ້ໄວທີ່ສຸດໄດ້ແນວໃດ?

**ສິ່ງສຳຄັນທີ່ສຸດ -** ການສຸມເຮື່ອແຮງໜ້ອຍລົງ ແລະ ເອົາເວລາໄວ້ໃຫ້ຕົວເອງເພື່ອໃຫ້ໄດ້: ຄິດບັນຫາໃຫຍ່ໆ; ມີເວລາຫຼິ້ນ ແລະ ຜ່ອນຄາຍ ເຊິ່ງຈະກະຕຸ້ນແນວຄິດສ້າງສັນ; ແລະ ຖືການນອນພັກຜ່ອນໃຫ້ເປັນບູລິມະສິດສູງທີ່ສຸດ.

**ທິດສະດີ 'ສິ່ງສຳຄັນທີ່ສຸດ' ແມ່ນຫຍັງ?** ທິດສະດີນີ້ບອກໃຫ້ພວກເຮົາຮູ້ວ່າ: ພວກເຮົາບໍ່ສາມາດເຮັດໄດ້ທຸກສິ່ງທຸກຢ່າງ ແລະ ຄວາມຮູ້ສຶກຕ້ອງການຢາກເຮັດໃຫ້ໄດ້ຫຼາຍຂຶ້ນ ເປັນພຽງຄວາມເພີ້ຝັນ. ແທນທີ່ຈະຄິດແນວນີ້, ພວກເຮົາຄວນ: (i) ເຮັດໃຫ້ໜ້ອຍລົງ ແຕ່ດີກວ່າເກົ່າ (ຫລຸດປະລິມານ ຖືຄຸນນະພາບເປັນຫຼັກ); (ii) ຢ່າພະຍາຍາມເຮັດທຸກສິ່ງທຸກຢ່າງໃຫ້ໄດ້ໝົດ; (iii) ຖາມຕົວເອງຄືນຕະຫຼອດເວລາ ແລະ ປັບປຸງແຜນຂອງທ່ານຢ່າງສະໝ່ຳສະເໝີ; (iv) ຮັບປະກັນໃຫ້ພວກເຮົາລົງມືເຮັດໃຫ້ໄດ້ຕາມແຜນເປັນຢ່າງດີ.

**ພວກເຮົາສາມາດນຳມາປະຕິບັດໃນຕົວຈິງແນວໃດ?** ຮຽນຮູ້ໃນການຍອມແພ້. ຄັນບໍ່ດັ່ງນັ້ນ ຖ້າພວກເຮົາພະຍາຍາມເຮັດທຸກຢ່າງ ພວກເຮົາຈະລົ້ມເຫຼວ. ຢຸດເຮັດໃນສິ່ງທີ່ບໍ່ສຳຄັນ, ຮຽນຮູ້ທີ່ຈະປະຕິເສດ, ຍອມຮັບຄວາມຜິດ ແລະ ກ້າວຕໍ່ໄປ. ຖ້າເປັນໜ້າວຽກໃໝ່-ທ້າທາຍ, ຈົ່ງກະກຽມ, ເຮັດໄປເທື່ອລະຂັ້ນນ້ອຍໆ (ຈຶ່ງບັນລຸໄດ້ງ່າຍກ່ວາ) ແລະ ເຮັດໃຫ້ເປັນກິດຈະຫວັດ - ຈະສ້າງຄວາມເຄີຍຊິນໃນການເຮັດວຽກຍາກ ໃຫ້ເປັນວຽກງ່າຍ.

# ຄາດຕະກອນໃນເງົາມືດ

*ບົດຄວາມປະກອບສ່ວນໂດຍ: ປາລິວັດ ອິນທະວົງ, ຫົວໜ້າສາຍງານ - ປະຕິບັດ ແລະ ບໍລິການໂຄງການ*

ໃນຂະນະທີ່ເຫດການເສຍຊີວິດຈາກ ອຸປະຕິເຫດທາງທ້ອງຖະໜົນ, ການສູບຢາ, ມະເຮັງ ແລະ ພະຍາດ COVID-19 ສືບຕໍ່ເປັນຂ່າວໃນສື່ຕ່າງໆ, ການເສຍຊີວິດ ແລະ ການບາດເຈັບຈາກ ອຸປະຕິເຫດລະເບີດບໍ່ທັນແຕກ (UXO) ກໍຍັງສືບຕໍ່ກະທົບຕໍ່ຊຸມຊົນ ໃນ ສປປ ລາວ.

ໃນປີ 2021, ສປປ ລາວ ລາຍງານອຸປະຕິເຫດ UXO 31 ຄັ້ງ ໂດຍມີການບາດເຈັບ 44 ຄົນ ແລະ ເສຍຊີວິດ 11 ຄົນ.

ວຽກງານເກັບກູ້ລະເບີດບໍ່ທັນແຕກ ໃນ ສປປ ລາວ ກໍໄດ້ມີຄວາມຫຼ້າຊ້າ ຍ້ອນການລະບາດຂອງພະຍາດ COVID-19 ອັນໄດ້ເຮັດໃຫ້ມີຕົວເລກການບາດເຈັບສູງຂຶ້ນສົມທຽບໃສ່ປີກ່ອນ.

ໂດຍລວມ, ສປປ ລາວ ເປັນປະເທດທີ່ມີການຖິ້ມລະເບີດຕໍ່ຫົວຄົນທີ່ໜັກໜ່ວງທີ່ສຸດໃນໂລກ. ໃນລະຫວ່າງປີ 1964 ຫາ 1973 ແມ່ນມີການຖິ້ມລະເບີດຫຼາຍກວ່າ 2 ລ້ານໂຕນ ເທົ່າກັບປະມານບົມບີ້ຫຼາຍກວ່າ 270 ລ້ານໜ່ວຍ ທີ່ໄດ້ຖືກຖິ້ມລົງໃສ່ ສປປ ລາວ. ໃນນັ້ນ ມີປະມານ 30% ແມ່ນຍັງບໍ່ທັນແຕກເທື່ອ ແລະ ມີພຽງ 1% ທີ່ໄດ້ຖືກເກັບກູ້ ຫຼື ທຳລາຍຕັ້ງແຕ່ປີ 1996 ເປັນຕົ້ນມາ.

ບໍ່ຄຳ-ທອງເຊໂປນຕັ້ງຢູ່ເມືອງໜຶ່ງ ທີ່ຖືກຖິ້ມລະເບີດລົງໃສ່ຫຼາຍທີ່ສຸດໃນປະເທດ. ຍ້ອນແນວນັ້ນ, LXML ຈຶ່ງໄດ້ນຳເອົາວຽກງານເກັບກູ້ລະເບີດທີ່ຍັງບໍ່ທັນແຕກ ເຂົ້າມາເປັນວຽກໜຶ່ງທີ່ສຳຄັນໃນວົງຈອນການຂຸດຄົ້ນ-ປຸງແຕ່ງ-ຜະລິດບໍ່ແຮ່ ເພື່ອຮັບປະກັນໃຫ້ພະນັກງານ, ຊຸມຊົນ ແລະ ການດຳເນີນງານຂອງພວກເຮົາປອດໄພຈາກອຸປະຕິເຫດ UXO.

ນັບຕັ້ງແຕ່ປີ 1996, LXML ໄດ້ລົງທຶນ US$52 ເຂົ້າໃນການເກັບກູ້ລະເບີດທີ່ບໍ່ທັນແຕກ ແລະ ທຳລາຍລະເບີດກວ່າ 60.000 ໜ່ວຍ ເຊິ່ງ 90 ສ່ວນຮ້ອຍຂອງລະເບີດຈຳນວນນີ້ ແມ່ນພ້ອມທີ່ຈະລະເບີດຖ້າຫາກໄດ້ຮັບການກະທົບ.

ຕະຫຼອດທົດສະວັດຜ່ານມາ, ກົດເຫຼັກຂອງທີມງານເກັບກູ້ລະເບີດແມ່ນ ຫ້າມມີການມ້າງລູກລະເບີດ ຫຼື ເຄື່ອນຍ້າຍລູກລະເບີດໂດຍບໍ່ຈຳເປັນ. ທຸກຄັ້ງທີ່ກວດພົບແມ່ນຈະຕ້ອງມີການທຳລາຍລູກລະເບີດກັບທີ່.

ທ່ານ ປາລິວັດ ອິນທະວົງ, ຫົວໜ້າສາຍງານປະຕິບັດ ແລະ ບໍລິການໂຄງການ ໄດ້ກ່າວວ່າ: *"ທຸກຄົນພາຍໃນທີມເຂົ້າໃຈດີ ເຖິງຄວາມສ່ຽງສູງທີ່ຕິດພັນກັບວຽກງານຂອງພວກເຮົາ. ອຸປະຕິເຫດກໍເກີດຂຶ້ນໄດ້ທຸກເວລາ ຖ້າພວກເຮົາບໍ່ປະຕິບັດຕາມມາດຕະຖານເຕັກນິກສະເພາະທີ່ຖືກວາງອອກ. ຄວາມຜິດພາດໃດໆອາດໝາຍເຖິງການສູນເສຍຊີວິດ ແລະ ບໍ່ມີໂອກາດເປັນຄັ້ງທີສອງເພື່ອກັບໄປແກ້ໄຂ. ສະນັ້ນ ພວກເຮົາຕ້ອງເອົາໃຈໃສ່ ຝຶກຝົນຢ່າງດີ ແລະ ມີປະສົບການໃນການດຳເນີນງານທີ່ອັນຕະລາຍນີ້."*

ທີມງານເກັບກູ້ລະເບີດຂອງ LXML ຈະສືບຕໍ່ເຮັດວຽກຢ່າງໃກ້ຊິດກັບ ຊຸມຊົນທ້ອງຖິ່ນ ແລະ ເຈົ້າໜ້າທີ່ພາກລັດເພື່ອ ກວດຄົ້ນ ແລະ ທຳລາຍລະເບີດທີ່ບໍ່ທັນແຕກ ຢູ່ ອ້ອມຂ້າງບໍ່ຄຳ-ທອງເຊໂປນ ເພື່ອໃຫ້ທຸກຄົນປອດໄພຂຶ້ນ.

ທີມງານບັນລຸການເຮັດວຽກເກັບກູ້ລະເບີດທີ່ປັດສະຈາກການບາດເຈັບມາໄດ້ 5 ປີຕິດຕໍ່ກັນ.



## ສະຖານີ Robotic Total Station (RTS) ແມ່ນຫຍັງ?

ສະຖານີ RTS ແມ່ນເຄື່ອງມືໃນການຕິດຕາມການເໜັງຕີງຂອງຝາບໍ່ ເພື່ອລະບຸການປ່ຽນແປງ ແລະ ຄວາມໝັ້ນຄົງຂອງສະໂລບຂອງບໍ່. ສິ່ງນີ້ເປັນການແຈ້ງເຕືອນທີມງານວາງແຜນ ແລະ ດຳເນີນງານບໍ່ແຮ່ ລ່ວງໜ້າ ກ່ຽວກັບຄວາມສ່ຽງດ້ານທໍລະນີເຕັກນິກ ເພື່ອຮັບປະກັນໃນການນຳໃຊ້ມາດຕະການຄວບຄຸມ ແລະ ຍົກຍ້າຍພະນັກງານທີ່ເຮັດວຽກໃນເຂດດັ່ງກ່າວອອກຈາກເຂດທີ່ເປັນອັນຕະລາຍ.

ທີ່ພາກສະໜາມເຊໂປນ, ພວກເຮົາຕິດຕັ້ງສະຖານີ RTS ທັງໝົດ 5 ສະຖານີ ເພື່ອຮັບປະກັນທີມງານເຮັດວຽກດ້ວຍຄວາມປອດໄພ ແລະ ບັນລຸເປົ້າໝາຍການຜະລິດແຮ່. ຂໍ້ມູນຂອງ RTS ແມ່ນໄດ້ຮັບການຕິດຕາມ ແລະ ວິເຄາະລາຍວັນ ແລະ ສ້າງເປັນບົດລາຍງານໃຫ້ແກ່ທີມງານວາງແຜນ ແລະ ດຳເນີນງານບໍ່ແຮ່. ສະຖານີດັ່ງກ່າວ ແມ່ນຕັ້ງຢູ່ ບໍ່ນາລຸ, ບໍ່ດິສໂຄເວີຣີ ຕາເວັນຕົກ 01 ຊີ, ບໍ່ດິສໂຄເວີຣີ ຕາເວັນຕົກ 03, ບໍ່ດິສໂຄເວີຣີ ຕາເວັນອອກ 01 ແລະ ບໍ່ດິສໂຄເວີຣີ ຕາເວັນອອກ 02.

# ສະຖານີຕິດຕາມການເໜັງຕີງຂອງຝາບໍ່






# ຄົ້ນພົບວັດຖຸບູຮານ ອາຍຸ 2000ປີ ຢູ່ ບໍ່ຄຳ-ທອງ ເຊໂປນ

**ໃນເດືອນກໍລະກົດ 2021**, LXML ໄດ້ຄົ້ນພົບວັດຖຸບູຮານຈຳນວນໜຶ່ງທີ່ມີອາຍຸເກົ່າແກ່ 2,000 ປີພາຍໃນຂົງເຂດຂອງບໍ່ຄຳ-ທອງເຊໂປນ. ວັດຖຸບູຮານທີ່ຄົ້ນພົບລວມມີ ຂວານເຫຼັກ ແລະ ໄຫຂະໜາດໃຫຍ່ທີ່ໃຊ້ເຂົ້າໃນພິທີກຳການຝັງສົບຄັ້ງທີ 2 ໃນໄລຍະທ້າຍຍຸກທອງຕົ້ນຍຸກເຫຼັກ.

ໃນປີ 2008 ກໍໄດ້ຄົ້ນພົບໄຫທີ່ຄ້າຍຄືໄຫຂະໜາດໃຫຍ່ດັ່ງກ່າວ ຢູ່ເຂດທົ່ງນາເງືອກ ເຊິ່ງ ໄດ້ຖືກສະເໜີເປັນ ສະຖານທີ່ມໍລະດົກຂອງແຂວງສະຫວັນນະເຂດ.

ນອກຈາກນັ້ນ, ທີມງານບູຮານວິທະຍາຂອງ LXML ຍັງໄດ້ຄົ້ນພົບໄຫເນື້ອແຂງເຊິ່ງໃນໄຫມີຂວານເຫຼັກ, ປອກແຂນທອງ ແລະ ໝາກປັດທີ່ເຮັດດ້ວຍເປືອກຫອຍ ແລະ ກ້າງປາ ທີ່ມີອາຍຸປະມານ ໄລຍະສະຕະວັດທີ 12; ພ້ອມເຄື່ອງມືທັນສະໄໝທີ່ສັນນິຖານໃນເບື້ອງຕົ້ນວ່າ ມາຈາກ ສະໄໝລ້ານຊ້າງລະຫວ່າງສະຕະວັດທີ 17 ເຖິງ 19.

ໃນໄລຍະຕົ້ນປີ2021, LXML ຍັງໄດ້ຄົ້ນພົບວັດຖະບູຮານອາຍຸເກົ່າແກ່ 6.000 ປີຈາກ ຍຸກຫີນຂັດ ຢູ່ໃກ້ບໍ່ຄຳ-ທອງເຊໂປນ.

ທ່ານ ສະໜານ ອະເນກາ ໄດ້ກ່າວວ່າ: *"ບໍລິສັດຂອງພວກເຮົາຍົກສູງ ການເຄົາລົບນັບຖືວັດທະນະທຳ ແລະ ຮີດຄອງປະເພນີຂອງຊຸມຊົນເຈົ້າພາບຂອງພວກເຮົາ. ຕັ້ງແຕ່ປີ 2008 ເປັນຕົ້ນມາ, LXML ໄດ້ລົງທຶນຫຼາຍກວ່າ US$1,5 ລ້ານ ເພື່ອສະໜັບສະໜູນການອະນຸລັກປະຫວັດສາດລາວ ແລະ ມໍລະດົກວັດທະນະທຳສຳລັບຄົນຮຸ່ນຕໍ່ໄປ."*

# ຄົ້ນພົບວັດຖຸບູຮານ ຍຸກລ້ານຊ້າງ



ໃນໄລຍະແຕ່ເດືອນ ກັນຍາ ຫາ ຕຸລາ 2021, ທີມງານມໍລະດົກວັດທະນະທຳຂອງ LXML ໄດ້ຄົ້ນພົບວັດຖຸບູຮານຈຳນວນໜຶ່ງທີ່ມີອາຍຸຕັ້ງແຕ່ສັດຕະວັດທີ 18 ຫຼື ຍຸກລ້ານຊ້າງ. ການຄົ້ນພົບເຫຼົ່ານີ້ ເປັນການຢັ້ງຢືນອີກຄັ້ງ ວ່າ ບໍ່ຄຳ-ທອງເຊໂປນ ຕັ້ງຢູ່ສະຖານໜຶ່ງທີ່ມີຄວາມໝາຍຄວາມສຳຄັນດ້ານປະຫວັດສານການຂຸດຄົ້ນບໍ່ແຮ່ໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້.

ໝໍ້ທອງ, ກ້ອນທອງ ແລະ ແຜ່ນທອງ ຄືບາງວັດຖຸບູຮານທີ່ຄົ້ນພົບໃນຫວ່າງບໍ່ດົນມານີ້. ລັກສະນະການຝັງນັ້ນເປັນການເຊື່ອງຊ້ອນໄວ້ເພື່ອເອົາມານຳໃຊ້ນຳຫຼັງ ແຕ່ບໍ່ແມ່ນການຝັງເພື່ອອຸທິດໃຫ້ແກ່ດວງວິນຍານ ຫຼື ພິທີກຳທາງສາດສະໜາອື່ນໆ, ເປັນຕົ້ນແມ່ນອຸທິດແກ່ຜູ້ທີ່ລ່ວງລັບ.

ມີ ໝໍ້ທອງ 4 ໜ່ວຍທີ່ຄົ້ນພົບຢູ່ ບໍ່ດິສໂກເວີຣີ ແລະ ບໍ່ໄມ້ແດງ ເຊິ່ງ ມີອາຍຸລະຫວ່າງ 300 ຫາ 2000 ປີ ກໍຄື ຍຸກລ້ານຊ້າງ. ວັດຖຸເຫຼົ່ານີ້ ແມ່ນນຳໃຊ້ເຂົ້າໃນຊີວິດປະຈຳວັນ.

ມີແຜ່ນທອງອີກ 17 ແຜ່ນທີ່ຄົ້ນພົບຫ່າງຈາກປ່າຊ້າຜາວັດໄປທາງຕາເວັນຕົກປະມານ 500 ແມັດ ມີອາຍຸລະຫວ່າງ 2464-1309 ກ່ອນ. ແຜ່ນທອງເຫຼົ່ານີ້ຜະລິດຂຶ້ນເພື່ອເປັນວັດຖຸດິບໃນການແລກປ່ຽນຊື້-ຂາຍສິນຄ້າຂອງຄົນສະໄໝນັ້ນ ຫຼື ໃຊ້ເພື່ອແທນເງິນ ດັ່ງເງິນທີ່ພວກເຮົາທຸກຄົນໃຊ້ໃນປັດຈຸບັນ. ໃນຂະນະທີ່ຄຳ ແລະ ໂລຫະເງິນນັ້ນອາດເປັນສິ່ງທີ່ຜູ້ຮັ່ງມີ ແລະ ມີອຳນາດເທົ່ານັ້ນທີ່ເຂົ້າຫາໄດ້ ແລະ ມີຢ່າງຫຼວງຫຼາຍໃນຍຸກບູຮານ, ແຕ່ວ່າ ທອງ ເປັນໂລຫະສົດທີ່ຄົນທົ່ວໆໄປສາມາດຫາ-ໃຊ້ໄດ້ງ່າຍ.

ນັບແຕ່ປີ 2008 ເປັນຕົ້ນມາ, ບໍລິສັດ ລຊມລ ໄດ້ລົງທຶນກວ່າ US$1,5 ລ້ານ ເຂົ້າໃສ່ໃນການສະໜັບສະໜູນໃຫ້ແກ່ການອະນຸລັກມໍລະດົກທາງປະຫວັດສາດ ແລະ ວັດທະນະທຳ ທີ່ມີມາດົນກວ່າ 3.000 ປີ ໂດຍຜ່ານການຮ່ວມມືກັບກົມມໍລະດົກ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ການທ່ອງທ່ຽວ; ມະຫາວິທະຍາໄລແຫ່ງຊາດລາວ ແລະ ມະຫາວິທະຍາໄລ ເຈມສ໌ຄຸກ ຂອງປະເທດອົດສະຕຣາລີ. ການຮ່ວມມືດັ່ງກ່າວ ໄດ້ສະໜັບສະໜູນວຽກງານພາກສະໜາມ ທີ່ມີລັກສະນະພິເສດໃນລະດັບຊຸມຊົນທ້ອງຖິ່ນ, ລະດັບປະເທດ ແລະ ສາກົນ ຊຶ່ງໄດ້ມີອາສາສະໝັກທີ່ເປັນນັກສຶກສາຈາກນະຄອນຫຼວງວຽງຈັນ, ຊຸມຊົນທ້ອງຖິ່ນ, ປະເທດອົດສະຕຣາລີ, ນັກບູຮານຄະດີ, ແລະ ເຈົ້າໜ້າທີ່ຈາກກົມມໍລະດົກປະຈຳຢູ່ບໍ່ຄຳ-ທອງ ເຊໂປນ ໄດ້ຮ່ວມມືກັນຢ່າງໃກ້ຊິດ ໃນວຽກງານສຶກສາ-ຄົ້ນຄວ້າກ່ຽວກັບ ຄວາມສີວິໄລໃນສະໄໝບູຮານ. ວຽກງານນີ້ຊ່ວຍໃຫ້ພວກເຮົາເຂົ້າໃຈກ່ຽວກັບວິຖີຊີວິດຂອງຄົນໃນອະດີດ ແລະ ຄວາມໝາຍຄວາມສຳຄັນຕໍ່ອະນາຄົດຂອງພວກເຮົາ.

ການຂຸດຄົ້ນບໍ່ແຮ່ໄດ້ເປັນປັດໃຈອັນສຳຄັນ ໃນການພັດທະນາຊຸມຊົນ ແລະ ສັງຄົມ ມາແຕ່ປະຫວັດສາດ. ໃນຄະນະທີ່ການຂຸດຄົ້ນວັດຖຸບູຮານ ຍັງຈະດຳເນີນຕໍ່ໄປ, ພວກເຮົາຫວັງວ່າຈະໄດ້ມີການເຜີຍແຜ່ການຄົ້ນພົບ ທີ່ໜ້າຕື່ນເຕັ້ນກວ່າເກົ່າ ທາງດ້ານມໍລະດົກວັດທະນະທຳ ແລະ ປະຫວັດສາດລາວ ໄດ້ຕື່ມໄປອີກຕໍ່ໆໄປ.


ສຽງບໍ່ຄຳເຊໂປນ | ກຸມພາ 2022

# ລາງວັນປັບປຸງຄວາມປອດໄພ ປະຈຳເດືອນ 7-8-9-ໄຕມາດ 3

ລາງວັນປັບປຸງຄວາມປອດໄພ ມີຈຸດປະສົງເພື່ອຍ້ອງຍໍບັນດາທີມງານ ສຳລັບຜົນງານສ້າງສັນໃນການປັບປຸງຄວາມປອດໄພຢູ່ບ່ອນເຮັດວຽກ ແລະ ໃນຫຼາຍກໍລະນີຍັງຊ່ວຍປັບປຸງສັກກະຍະພາບຂອງການດຳເນີນງານອີກດ້ວຍ.

ທີມງານວິສະວະກອນໂຄງການ, ຂຸດຄົ້ນແຮ່, ແລະ ບຳລຸງຮັກສາໂຮງງານ ໄດ້ຮັບລາງວັນທີມລະ 2.000.000 ກີບ ສຳລັບການຊະນະເລີດປະຈຳເດືອນ ແລະ ທີມງານຂຸດຄົ້ນແຮ່ ຍັງໄດ້ຮັບລາງວັນເພີ່ມຕື່ມ 3.000.000 ກີບ ສຳລັບລາງວັນປະຈຳໄຕມາດ 3. ຂໍສະແດງຄວາມຊົມເຊີຍ ມາຍັງທຸກທີມງານທີ່ໄດ້ຄົ້ນຄິດວິທີການສ້າງສັນເພື່ອປັບປຸງຄວາມປອດໄພໃນໄລຍະໄຕມາດທີ 3. ຈົ່ງສືບຕໍ່ປັບປຸງ ແລະ ສົ່ງຜົນງານຂອງທ່ານເຂົ້າມາໃນໄລຍະຂ້າງໜ້າ.

ທີມງານ **ວິສະວະກອນໂຄງການ** ເປັນໜຶ່ງໃນ 11 ທີມງານທີ່ສົ່ງຜົນງານເຂົ້າແຂ່ງຂັນສຳລັບເດືອນກໍລະກົດ. ທີມງານໄດ້ນຳສະເໜີແນວຄວາມຄິດສ້າງສັນໃນການສ້າງ 'ລໍ້ໃນການຂົນສົ່ງເຄື່ອງມືອຸປະກອນ' ຈາກບ່ອນມ້ຽນເຄື່ອງໄດ້ຢ່າງງ່າຍດາຍ ແລະ ໃຊ້ຄົນໜ້ອຍ.




ນະວັດຕະກຳນີ້ຊ່ວຍຫລຸດຜ່ອນການເຈັບຫຼັງ ແລະ ນຳໃຊ້ຄົນໜ້ອຍກວ່າ ເພື່ອເພີ່ມສັກກະຍະພາບການເຮັດວຽກ ແລະ ນຳສົ່ງອຸປະກອນຂະໜາດນ້ອຍດ້ວຍຄວາມປອດໄພກວ່າ.

ທີມງານ **ບຳລຸງຮັກສາໂຮງງານ** ເປັນໜຶ່ງໃນສາມທີມງານ ທີ່ສົ່ງຜົນງານເຂົ້າແຂ່ງຂັນໃນເດືອນກັນຍາ, ເພື່ອຫລຸດຜ່ອນຄວາມສ່ຽງໃນການເກີດບາດເຈັບ ຫຼື ເສຍຊີວິດ ໃນສະຖານທີ່ເຮັດວຽກ.

ທີມງານໄດ້ຕິດຕັ້ງແນວປົກສາຍໄຟຟ້າຢູ່ຕູ້ເຕົາເຜົາກາກບອນ




ເພື່ອຫຼີກເວັ້ນບໍ່ໃຫ້ບຸກຄົນສຳຜັດກັບກະແສໄຟຟ້າ ແລະ ມີຄວາມສ່ຽງໃນການຖືກໄຟຊ໊ອດ. ນີ້ຍັງສອດຄ່ອງກັບມາດຕະຖານກ່ຽວຂ້ອງກັບໄຟຟ້າຂອງສະໜາມເຊໂປນ.

ທີມງານພະແນກ **ຂຸດຄົ້ນແຮ່** ແມ່ນໜຶ່ງໃນຫ້າທີມງານທີ່ສົ່ງຜົນງານເຂົ້າແຂ່ງຂັນສຳລັບເດືອນ ສິງຫາ ແລະ ເປັນຜູ້ຊະນະເລີດ ລາງວັນປະຈຳໄຕມາດທີ 3 ອີກດ້ວຍ ສຳລັບການປັບປຸງເຕັກນິກການລະເບີດຫີນເພື່ອຫລຸດຜ່ອນຫີນຟົ້ງ.

ດ້ວຍການນຳໃຊ້ວັດສະດຸທີ່ສາມາດນຳກັບມາໃຊ້ໄດ້ຄືນ ເຊັ່ນ ສາຍພານລຳລຽງແຮ່ເກົ່າ, ວິທີການປັບປຸງນີ້ ຊ່ວຍຫລຸດຜ່ອນຄວາມເສຍຫາຍຕໍ່ຊັບສິນທີ່ຢູ່ອ້ອມແອ້ມເຂດລະເບີດຫີນ ແລະ ຮັກສາໄລຍະທີ່ປອດໄພຈາກຫີນຟົ້ງ. ນອກຈາກນັ້ນ, ຍັງເປັນການຫລຸດຜ່ອນໄລຍະເວລາການຜະລິດ ແລະ ປະຢັດເວລາໂດຍທີ່ທີມງານປໍ້ານໍ້າບໍ່ມີຄວາມຈຳເປັນຕ້ອງເຄື່ອນຍ້າຍປໍ້ານໍ້າອອກທຸກຄັ້ງກ່ອນຈະລະເບີດຫີນ.






# ລະດູຈູດໄຮ່: ເຊໂປນ ຕິດຕາມ-ຮັກສາຄຸນນະພາບອາກາດ ແລະ ສຸຂະພາບພະໜັກງານ ແລະ ຊຸມຊົນ

*ໂດຍ: ທີມງານ ສຸຂະພາບ ແລະ ສຸຂະອະນາໄມຢູ່ສະຖານທີ່ເຮັດວຽກ (OH&H)*



ຢູ່ພາກສະໜາມເຊໂປນ, ທີມງານ ສຸຂະພາບ ແລະ ສຸຂະອະນາໄມຢູ່ສະຖານທີ່ເຮັດວຽກ ຫຼື OH&H ຂອງພວກເຮົາ ຕິດຕາມກວດການົນລະພິດທາງອາກາດ ຢ່າງເປັນປະຈຳ ໂດຍສອດຄ່ອງກັບ ແຜນການຕິດຕາມ ແລະ ຄຸ້ມຄອງສິ່ງແວດລ້ອມຂອງບໍລິສັດ ເພື່ອຮັບປະກັນໃຫ້ມີການ ຕິດຕາມ, ຄວບຄຸມ ແລະ ຮັກສາສະພາບແວດລ້ອມອ້ອມຂ້າງພາກສະໜາມທີ່ດີ ສຳລັບພະນັກງານ ແລະ ຊຸມຊົນຂອງພວກເຮົາ.

ໃນແຕ່ລະປີ ແຕ່ເດືອນ ກຸມພາ ຫາ ເມສາ, ພາກສະໜາມເຊໂປນຈະພົບພໍ້ກັບ ບັນຫາລະດັບ ຝຸ່ນລະອອງຂະໜາດ2.5 (PM2.5) ທີ່ສູງຍ້ອນກິດຈະກຳຈູດປ່າເຮັດໄຮ່ໃນຊຸມຊົນ. ສະຖິຕິລະດັບ PM2.5 ສູງທີ່ສຸດທີ່ເຄີຍພົບພໍ້ແມ່ນສູງກວ່າ 150 ug/m3 ເຊິ່ງ ສູງກວ່າ 3 ເທົ່າຂອງດັດສະນີມາດຕະຖານ.

ໃນເດືອນມີນາ 2021, ລະດັບ PM2.5 ໃນສາມບ້ານໃກ້ບໍ່ຄຳ-ທອງຂອງພວກເຮົາ ໄດ້ ທະລຸຂຶ້ນກາຍລະດັບສະເລ່ຍມາດຕະຖານ. ຕົວຢ່າງ, ລະດັບ PM2.5 ໃນບ້ານວຽງ ໄດ້ກາຍ 3 ເທົ່າຂອງດັດສະນີມາດຕະຖານ (ວັນທີ 18-19 ມີນາ) ແລະ ສ່ວນໃຫຍ່ແມ່ນມາຈາກ ກິດຈະກຳຂອງຊຸມຊົນ.

ເພື່ອຕິດຕາມຄຸນນະພາບອາກາດຕົວຈິງ, ທີມງານ OH&H ຂອງພວກເຮົາໄດ້ຕິດຕັ້ງ ເຄື່ອງຕິດຕາມອາກາດ AirMetER-DX ເພື່ອຕິດຕາມ ແລະ ບັນທຶກລະດັບ ຝຸ່ນລະອອງຂະໜາດ 2.5 (PM2.5 ) ແລະ 10 (PM10) ຢູ່ສາມບ້ານໃກ້ບໍ່ຄຳ-ທອງຂອງພວກເຮົາ ຄື ໃນ ບ້ານວຽງ, ບ້ານໂນນສົມບູນ ແລະ ບ້ານເມືອງຫຼວງ; ພ້ອມທັງ 2 ຈຸດຢູ່ ແຄ້ມຫີນສົ້ມ ແລະ ຜາດ່າງ.

ອຸປະກອນດັ່ງກ່າວ ແມ່ນສາມາດ ສ້າງບົດລາຍງານໂດຍອັດຕະໂນມັດ ແລະ ສົ່ງໂດຍກົງໃຫ້ແກ່ທີມງານ OH&H ໃຫ້ສາມາດຕິດຕາມຢ່າງໃກ້ຊິດ ຄຸນນະພາບອາກາດຕົວຈິງ ພ້ອມທັງໃຫ້ສາມາດຫາວິທີທາງຫລຸດຜ່ອນຄວາມສ່ຽງຕ່າງໆທີ່ເກີດຈາກມົນລະພິດທາງອາກາດ.

**PM2.5 ແລະ PM10 ແມ່ນຫຍັງ?** ແມ່ນຝຸ່ນລະອອງນ້ອຍໆໃນອາກາດທີ່ອາດມີຜົນຮ້າຍຫຼາຍຕໍ່ສຸຂະພາບ. ເວລາລະດັບຝຸ່ນລະອອງເພີ່ມຂຶ້ນ ແລະ ເຂົ້າໄປໃນປອດຂອງພວກເຮົາ, ສຸຂະພາບຂອງພວກເຮົາອາດໄດ້ຮັບຜົນກະທົບເຊັ່ນ ຫາຍໃຈຍາກ-ຫາຍໃຈຝືດ, ແສບຕາ, ອື່ນໆ.

**PM2.5 ແລະ PM10 ເກີດຈາກຫຍັງ?** ວຽກງານກະສິກຳ, ວຽກງານອຸດສາຫະກຳ, ການຈູດປ່າ ແລະ ນໍ້າມັນເຊື້ອໄຟຖ່ານຫີນ, ກິດຈະກຳກໍ່ສ້າງ, ກິດຈະກຳທຳລາຍລະເບີດ ແລະ ຝຸ່ນທ້ອງຖະໜົນ ເປັນບາງກິດຈະກຳທີ່ສ້າງມົນລະພິດທາງອາກາດ.

ຖ້າທ່ານຕ້ອງການຮຽນຮູ້ເພີ່ມຕື່ມກ່ຽວກັບ PM2.5 ແລະ PM10 ແລະ ຜົນກະທົບຕໍ່ສຸຂະພາບຂອງທ່ານ, ກະລຸນາຕິດຕໍ່ທີມງານ OH&H ທີ່: lxmloccupationalhygiene@lxml.la.

# ວັນເຮັດວຽກຢູ່ທີ່ສູງຢ່າງປອດໄພ

*ໂດຍ: ເຊີເກ ລີເຊີນ, ຜູ້ຈັດການວຽກງານວິສະວະກຳ ແລະ ສ້ອມແປງ*

**30 ພຶດສະພາ 2021** – ທີມງານສ້ອມແປງໂຮງງານ ໄດ້ຈັດ ວັນເຮັດວຽກຢູ່ບ່ອນສູງຢ່າງປອດໄພ. ທີມງານໄດ້ເຮັດກິດຈະກຳເພື່ອຝຶກວິທີການ ກູ້ໄພໃນກໍລະນີເກີດອຸປະຕິເຫດ ຊັບສະແປນເຊັນທຣ໌ມາ ຫຼື ກໍລະນີຄົນຫ້ອຍຢູ່ບ່ອນສູງດົນ ຫຼື ຕົກຈາກບ່ອນສູງ ໂດຍເກີດອາການເສັ້ນເລືອດໃຫຍ່ຢູ່ຂາຕາຍ (ເປັນຜິດ). ຊັບສະແປນເຊັນທຣ໌ມາ ສາມາດເຮັດໃຫ້ເກີດການເສຍຊີວິດໄດ້ ລະຫວ່າງ 10 ຫາ 20 ນາທີ ທີ່ເກີດອຸປະຕິເຫດ. ເປົ້າໝາຍຂອງກິດຈະກຳຄັ້ງນີ້ແມ່ນເພື່ອຮັບປະກັນໃຫ້ພະນັກງານຮຽນຮູ້ແຜນການປ້ອງກັນການຕົກຈາກບ່ອນສູງ.

ການເຮັດວຽກຢູ່ບ່ອນສູງ ແມ່ນສ່ວນໜຶ່ງ ໃນກົດລະບຽບຮັກສາຊີວິດຂອງບໍ່ຄຳ-ທອງ ເຊໂປນ.

"ພວກເຮົາຈະນຳໃຊ້ອຸປະກອນປ້ອງກັນການຕົກຕະຫຼອດເວລາ ທີ່ເຮັດວຽກຢູ່ໃນບ່ອນທີ່ມີຄວາມສ່ຽງຕົກຈາກບ່ອນທີ່ສູງ 2 ແມັດຂຶ້ນໄປ."

ທີມງານບໍລິຫານຂອງພວກເຮົາ ລວມມີ ຜູ້ຈັດການໃຫຍ່, ຮອງຜູ້ຈັດການໃຫຍ່, ຜູ້ຈັດການຝ່າຍບຸກຄະລາກອນ ແລະ ໂຮງສ້ອມແປງເຄື່ອນທີ່ ໄດ້ເຂົ້າຮ່ວມ ແລະ ສະໜັບສະໜູນກິດຈະກຳຄັ້ງນີ້ຢ່າງຕັ້ງໜ້າ. ຕ້ອງຂໍຂອບໃຈເປັນພິເສດແກ່ ໄມໂກຣ໋ອດແວວ ແລະ ທີມງານຫ້າງຮ້ານ ທີ່ໄດ້ແບ່ງປັນຄວາມຮູ້ ແລະ ປະສົບການ. ພວກເຮົາຈະສືບຕໍ່ຮຽນຮູ້ ແລະ ປັບປຸງທັກສະຂອງພວກເຮົານຳກັນໄປເລື້ອຍໆ.





# ທີມງານຊີເຈາະ ປັບປຸງຜົນການປະຕິບັດງານຢ່າງປອດໄພ ໂດຍບໍ່ຫວັ່ນລະດູຝົນ

ທີມງານຊີເຈາະຈາກພະແນກຂຸດຄົ້ນແຮ່ ໄດ້ຄົ້ນຄິດອອກແບບ "ເຕັກນິກການເຈາະແບບໃສ່ທໍ່" ອັນໃດປັບປຸງຜົນການປະຕິບັດງານການຊີເຈາະ.

ໂຄງສ້າງຫີນທີ່ສັບປົນ ແລະ ຄວາມດັນສູງຈາກໃຕ້ດິນ ບວກກັບ ນ້ຳເທິງໜ້າດິນ ໃນລະດູຝົນ ໄດ້ສ້າງຄວາມທ້າທາຍໃຫ້ແກ່ວຽກງານຊີເຈາະ. ວິທີການ ແລະ ເຕັກນິກທີ່ປະຕິບັດໃນເມື່ອກ່ອນ ໄດ້ເຮັດໃຫ້ຄຸນນະພາບການເຮັດວຽກຕໍ່າ ແລະ ເສຍເວລາກັບການຕ້ອງຊີເຈາະຮອບໃໝ່ຄືນ ເຊິ່ງມີຜົນຕໍ່ຄ່າໃຊ້ຈ່າຍຕ່າງໆ ກໍຄື ຄວາມອັນຕະລາຍຈາກຫີນຟົ້ງທີ່ມີຜົນກະທົບຕໍ່ຊຸມຊົນ.

"ເຕັກນິກການເຈາະແບບໃສ່ທໍ່" ຖືວ່າເປັນນະວັດຕະກຳໃໝ່ ໂດຍທີມງານຊີເຈາະຂອງພວກເຮົາ ທີ່ໄດ້ປັບປຸງຄຸນນະພາບການເຮັດວຽກເປັນຕົ້ນ: ຮູລະເບີດຫີນຈະເລິກກວ່າເກົ່າ ແລະ ສອດຄ່ອງກັບມາດຕະຖານດ້ານຄຸນນະພາບ, ການຫລຸດຜ່ອນຫີນຟົ້ງ ແລະ ຫລຸດຜ່ອນຄວາມຈຳເປັນໃນການລະເບີນຫີນຄືນໃໝ່.

**ທ່ານ ແສງເດືອນ ແຊ້ກວ້ຍ, ຫົວໜ້າສາຍງານ ຊີເຈາະ ແລະ ລະເບີດຫີນ** ໄດ້ກ່າວວ່າ: *"ຫົວໜ້າຄຸມງານການຊີເຈາະ ໄດ້ຝຶກອົບຮົມວິຊາການຊີເຈາະຂອງ LXML ແລະ ຜູ້ຮັບເໝົາ ຈຳນວນ 42 ຄົນ ກ່ຽວກັບເຕັກນິກໃໝ່ນີ້, ໂດຍສະເພາະໃນເຂດທີ່ມີນ້ຳຂັງຫຼາຍ."*

"ພວກເຮົາມີຄວາມພາກພູມໃຈທີ່ສາມາດຄົ້ນຄິດເຕັກນິກໃໝ່ນີ້ ເຊິ່ງ ປອດໄພກວ່າເກົ່າ ແລະ ມີປະສິດທິພາບ ກໍຄື ປະສິດທິຜົນກວ່າເກົ່າ."

ໃນປີ 2020, LXML ບັນລຸສະຖິຕິໃໝ່ ໃນການຂຸດຄົ້ນແ ຮ່ໄດ້ 32 ລ້ານໂຕນ ແລະ ຜະລິດຄຳໄດ້ 2 ໂຕນ. ເພື່ອບັນລຸເປົ້າໝາຍການຜະລິດຄຳໃຫ້ໄດ້ 7,6 ໂຕນໃນປີ 2021, ພວກເຮົາກໍຕ້ອງຂຸດຄົ້ນຫຼາຍຂຶ້ນ ແລະ ການຊີເຈາະ ແລະ ລະເບີດຫີນ ກໍເປັນສ່ວນໜຶ່ງທີ່ສຳຄັນຂອງຂະບວນການນີ້.




**1 ມິຖຸນາ 2021** – ວັນປູກຕົ້ນໄມ້ແຫ່ງຊາດປີນີ້, LXML ໄດ້ມອບເບ້ຍຕົ້ນໄມ້ທ້ອງຖິ່ນກວ່າ 200 ຕົ້ນໃຫ້ແກ່ແຂວງສະຫວັນນະເຂດ ແລະ ເມືອງວິລະບູລີ. ນອກຈາກນັ້ນ, ທີມງານພົວພັນຊຸມຊົນຂອງພວກເຮົາຮ່ວມກັບຊຸມຊົນຢູ່ 5 ບ້ານອ້ອມຂ້າງຍັງໄດ້ປ່ອຍລູກປາ 16 000 ໂຕ. ໃນປີ 2021, ລັດຖະບານລາວມີແຜນປູກຕົ້ນໄມ້ໃຫ້ໄດ້ 200 000 ເຮັກຕ້າ ລວມທັງ 3 240 ເຮັກຕາຢູ່ແຂວງສະຫວັນນະເຂດ ເພື່ອໃຫ້ບັນລຸໄດ້ເປົ້າໝາຍການປົກຄຸມປ່າໄມ້ 70% ໃນປະເທດພາຍໃນປີ 2025.

# ກອງປະຊຸມປະຈຳເດືອນ ຂອງທີມງານບໍລິການພາກສະໜາມ ເນັ້ນໃສ່ຄວາມປອດໄພເປັນສິ່ງທຳອິດ

*ບົດຄວາມປະກອບສ່ວນໂດຍ: ທ່ານ ຕຸລາພອນ ພົນພິລັດ ຫົວໜ້າຄຸມງານ ວິຖີຊີວິດ*

**ໃນວັນທີ 28 ພະຈິກ 2021**, ທີມງານບໍລິການພາກສະໜາມ ໄດ້ຈັດກອງປະຊຸມຄວາມປອດໄພປະຈຳເດືອນ ທີ່ຫ້ອງອາຫານຜາດ່າງ ພາຍໃຕ້ການເປັນປະທານຂອງ ທ່ານນາງ ອໍລະດາ ບຸນຍາວົງ, ຫົວໜ້າສາຍງານບໍລິຫານ, ບໍລິສັດສະຫວັນມາສເຕີ ບໍລິການທຳຄວາມສະອາດ ຊຶ່ງມີພະນັກງານ ແລະ ຜູ້ຮັບເໝົາເຂົ້າຮ່ວມກວ່າ 100 ຄົນ.



ກອງປະຊຸມໄດ້ແລກປ່ຽນຄວາມຮູ້ ແລະ ຂໍ້ມູນກ່ຽວກັບສະຖານທີ່ເຮັດວຽກທີ່ປອດໄພ, ຖອດຖອນບົດຮຽນຈາກອຸບັດຕິເຫດຄັ້ງທີ່ຜ່ານມາ. ຜູ້ເຂົ້າຮ່ວມໄດ້ຕັກເຕືອນກັນໃຫ້ນຳໃຊ້ຫຼັກການ 'ຢຸດ ແລະ ຄິດ' ທຸກຄັ້ງ ເພື່ອຮັບປະກັນການເຮັດວຽກທີ່ປອດໄພ. ທຸກວຽກງານ ແມ່ນມີຄວາມສ່ຽງ ແລະ ເປັນສິ່ງທີ່ສຳຄັນຫຼາຍ ທີ່ຈະລະບຸຄວາມສ່ຽງເຫຼົ່ານີ້ ແລະ ຈຳກັດມັນອອກໄປ ເພື່ອຮັບປະກັນໃຫ້ພະນັກງານທຸກຄົນມີຄວາມປອດໄພ.

ທ່ານນາງ ອໍລະດາ ບຸນຍາວົງ, ຫົວໜ້າສາຍງານບໍລິຫານ, ບໍລິສັດ ສະຫວັນມາສເຕີ ບໍລິການທຳຄວາມສະອາດ ກ່າວວ່າ: "ທຸກຄົນມີອຳນາດໃນການຢຸດການປະພຶດທີ່ບໍ່ປອດໄພ ເພື່ອໃຫ້ພວກເຮົາກັບຄືນເມືອຫາຄອບຄົວດ້ວຍຄວາມປອດໄພໃນທຸກຄັ້ງ ແລະ ທຸກມື້"

ພະນັກງານ ແລະ ຜູ້ຮັບເໝົາ ຍັງໄດ້ມີໂອກາດຮ່ວມຫຼິ້ນເກມ ແລະ ຮັບຂອງລາງວັນ ຊຶ່ງເປັນການຢ້ຳຄືນກ່ຽວກັບຫົວຂໍ້ດ້ານຄວາມປອດໄພທີ່ສົນທະນາກັນ.




# ຄວາມປອດໄພ ກ່ຽວກັບໄຟຟ້າ

**ໃນເດືອນ ຕຸລາ 2021,** ພວກເຮົາໄດ້ຈັດ ວັນຄວາມປອດໄພກ່ຽວກັບໄຟຟ້າໃນໂຮງງານຜະລິດ.

ທ່ານ ບຸນເກີດ ໄຊຍະລາດ, ຫົວໜ້າສາຍງານໄຟຟ້າຂອງ LXML ພ້ອມດ້ວຍທີມງານ ໄດ້ນຳພາ ກິດຈະກຳພາກປະຕິບັດຕົວຈິງ ແລະ ແບບມີສ່ວນຮ່ວມເພື່ອປູກຈິດສຳນຶກກ່ຽວກັບຄວາມອັນຕະລາຍຂອງກະແສໄຟຟ້າ ໃຫ້ແກ່ພະນັກງານ ແລະ ຜູ້ຮັບເໝົາກວ່າ 60 ຄົນ. ບົດຮຽນທີ່ຖອດຖອນໄດ້ມີຄື:

- ຢ່ານຳໃຊ້ໄຟເກີນຂອບເຂດຂອງສາຍປັກສຽກ.
- ຢ່າຕໍ່ສາຍພ່ວງຫຼາຍສາຍ!
- ຢ່າບັງຄັບສຽບປັກໃສ່ຮູປັກສຽບທີ່ບໍ່ຖືກກັນ.
- ຫ້າມນຳໃຊ້ສາຍປັກສຽບທີ່ມີຄວາມເສຍຫາຍ.
- ໃຫ້ເລືອກສາຍປັກສຽບທີ່ເໝາະສົມ.
- ໃຫ້ກວດກາປະລິມານວັດທີ່ສາມາດຮັບຮອງໄດ້ຂອງປັກສຽບກ່ອນໃຊ້ງານ.

ຂໍຂອບໃຈທີມງານໄຟຟ້າຂອງ LXML ສຳລັບກິດຈະກຳທີ່ເປັນປະໂຫຍດ ແລະ ໄດ້ຄວາມຮູ້ນີ້!

# ຄົບຮອບ 100 ປີ
# ພັກກອມມູນິດຈີນ




庆祝中国共产党成立100周年

The 100th Anniversary of the Founding of The Communist Party of China




**ວັນທີ 1 ກໍລະກົດ 2021** ເປັນວັນຄົບຮອບ 100 ປີຂອງພັກຄອມມູນິດຈີນ. ພາຍໃຕ້ການນຳພາຂອງພັກ, ສປ ຈີນ ໄດ້ຫັນປ່ຽນກ້າວສູ່ປະເທດທີ່ມີເສດຖະກິດໃຫຍ່ທີ່ສຸດອັນດັບສອງຂອງໂລກ ດ້ວຍການພັດທະນາເຕັກໂນໂລຊີ ແລະ ໂຄງລ່າງພື້ນຖານແນວໜ້າໃນໂລກ.

ໃນວາລະດັ່ງກ່າວນີ້, ທ່ານເລຂາທິການໃຫຍ່-ປະທານປະເທດ ສີ ຈິ້ນປິງ ໄດ້ຖະແຫຼງ ບົດກ່າວ ທີ່ມີຄວາຍໝາຍສຳຄັນ. ສໍາລັບພວກເຮົາຢູ່ ໂຄງການເຊໂປນ, ທ່ານປະທານ ລຊມລ ໄດ້ຝາກ ຄວາມເຫັນກ່ຽວກັບການສະເຫຼີມສະຫຼອງຂອງ ສປ ຈີນ ແລະ ບໍລິສັດ ຊີເຟີງ.

**ການສະເຫຼີມສະຫຼອງຄົບຮອບ 100 ປີ ຂອງພັກກອມມູນິດຈີນ**

ການສະຫຼອງຄົບຮອງ 100 ປີ ຂອງການສ້າງຕັ້ງພັກກອມມູນິດຈີນ ເປັນວັນທີ່ສຳຄັນໃນປະຫວັດສາດຂອງ ພັກກອມມູນິດຈີນ ແລະ ປະຊາຊົນຈີນ.

ໜຶ່ງສະຕະວັດກ່ອນໜ້ານີ້ຕອນສ້າງຕັ້ງພັກກອມມູນິດຈີນ ແມ່ນມີພຽງສະມາຊິກ 50 ຄົນກວ່າໆ. ໃນມື້ນີ້, ພັກກອມມູນິດຈີນ ປະກອບດ້ວຍສະມາຊິກຫຼາຍກວ່າ 95 ລ້ານຄົນໃນປະເທດທີ່ມີປະຊາກອນກວ່າ 1.4 ຕື້ຄົນ ເຮັດໃຫ້ພັກກອມມູນິດຈີນ ເປັນພັກນຳພາທີ່ໃຫຍ່ທີ່ສຸດໃນໂລກ ໂດຍມີອິດທິພົນໃນເວທີສາກົນຢ່າງມະຫາສານ.

ໜຶ່ງສະຕະວັດກ່ອນໜ້ານີ້, ສປ ຈີນ ແມ່ນຕົກຢູ່ແຖວຫຼັງໃນສາຍຕາຂອງຊາວໂລກ. ໃນມື້ນີ້, ຮູບພາບທີ່ ສປ ຈີນ ສະແດງຕໍ່ຊາວໂລກ ແມ່ນຮູບພາບຂອງປະເທດທີ່ຈະເລີນຮຸ່ງເຮືອງກ້າວໜ້າສູ່ການຟື້ນຟູປະເທດແບບບໍ່ມີຜູ້ໃດມາຢຸດຢັ້ງທ່ວງດຶງໄດ້.

**ຜົນສຳເລັດຂອງ ສປ ຈີນ ແລະ ບໍລິສັດ ຊີເຟີງ**

ຜ່ານຄວາມພະຍາຍາມຢ່າງຕໍ່ເນື່ອງຂອງພັກ ແລະ ປະຊາຊົນທົ່ວປະເທດ, ພວກເຮົາໄດ້ບັນລຸເປົ້າໝາຍ 100 ປີທຳອິດໃນການສ້າງສັງຄົມທີ່ຈະເລີນຮຸ່ງເຮືອງຮອບດ້ານ. ອັນນີ້ໝາຍຄວາມວ່າ ພວກເຮົາໄດ້ແກ້ໄຂບັນຫາປະຫວັດສາດໃນການລົບລ້າງຄວາມທຸກຍາກໃຫ້ໝົດໄປ ໃນ ສປ ຈີນ. ມາຮອດປັດຈຸບັນພວກເຮົາພວມກ້າວໜ້າຢ່າງໝັ້ນໃຈ ໄປສູ່ສະຕະວັດທີສອງ ໃນການສ້າງ ສປ ຈີນໃຫ້ເປັນ ປະເທດສັງຄົມນິຍົມທີ່ທັນສະໄໝຮອບດ້ານ. ອັນນີ້ເປັນຜົນສຳເລັດອັນຍິ່ງໃຫຍ່ສ່ອງໃສຂອງ ສປ ຈີນ, ຂອງ ປະຊາຊົນ ຈີນ ແລະ ຂອງພັກກອມມູນິດຈີນ!

ບໍລິສັດຊີເຟີງຂຸດຄົ້ນຄຳ ເປັນບໍລິສັດທີ່ຢູ່ໃນຕະຫຼາດຮຸ້ນໃນ ສປ ຈີນ, ມີຄວາມມຸ່ງໝັ້ນໃນການຂຸດຄົ້ນຄຳ, ພັດທະນາ ແລະ ດຳເນີນໂຄງການບໍ່ແຮ່ໃຫ້ສອດຄ່ອງກັບມາດຕະຖານສາກົນ ແລະ ນັບມື້ມີການພັດທະນາກໍຄືຂະຫຍາຍໂຕໄປເລື້ອຍໆ. ບໍລິສັດ ໄດ້ກ້າວຂາທຳອິດສູ່ການເປັນບໍລິສັດສາກົນ ໃນປີ 2018. ພາຍຫຼັງທີ່ທ່ານ ຫວັງ ຈຽນຫົວ ໄດ້ມາຮັບຕຳແໜ່ງ ປະທານຂອງບໍລິສັດ ຊີເຟີງຂຸດຄົ້ນຄຳ, ບໍລິສັດໄດ້ ສືບຕໍ່ ປັບປຸງວິທີການບໍລິຫານຈັດການ, ໝູນໃຊ້ແນວຄິດດ້ານການພັດທະນາໃຫ້ເກີດໝາກຜົນສູງທີ່ສຸດ ແລະ ປັບປຸງວັດທະນາທຳອົງກອນ. ນອກຈາກນັ້ນ, ບໍລິສັດຍັງ ມຸ່ງໝັ້ນເພື່ອ “ເປັນບໍລິສັດຂຸດຄົ້ນຄຳທີ່ຖືການອຸທິດ ແລະ ຄວາມເປັນມືອາຊີບເປັນໃຈກາງ ສຸມໃສ່ການຂຸດຄົ້ນຄຳ.”

ໂດຍຮັກສາມາດຕະຖານສູງດ້ານຄວາມປອດໄພ ແລະ ສິ່ງແວດລ້ອມ, ບໍລິສັດຈະສືບຕໍ່ເພີ່ມການລົງທຶນໃສ່ວຽກງານສຳຫຼວດ, ຍືດອາຍຸຂອງບໍ່ແຮ່, ສືບຕໍ່ສ້າງຄວາມອຸດົມຮັ່ງມີໃຫ້ແກ່ຜູ້ມີສ່ວນຮ່ວມທຸກພາກສ່ວນ ແລະ ຍຶດໝັ້ນໃນອຸດົມການຫຼັກຂອງຊີເຟີງ ຄື: “ການສ້າງຄຸນຄ່າໃຫ້ແກ່ຜູ້ມີສ່ວນຮ່ວມທຸກພາກສ່ວນ ຜ່ານການພັດທະນາຂອງ ບໍລິສັດຊີເຟີງຂຸດຄົ້ນຄຳ”.

**ສາຍພົນພັນລາວ-ຈີນ ແລະ ຊີເຟີງ ໃນ ສປປ ລາວ**

ລາວ ແລະ ຈີນ ເປັນປະເທດເພື່ອນບ້ານມາຫຼາຍສະຕະວັດ. ໃນໂອກາດຄົບຮອບ 100 ປີຂອງ ພັກກອມມູນິດຈີນ, ທ່ານ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຂອງພັກປະຊາຊົນປະຕິວັດລາວ ແລະ ປະທານປະເທດແຫ່ງ ສປປ ລາວ ໄດ້ສົ່ງສານອວຍພອນຊົມເຊີຍພັກກອມມູນິດຈີນ ແລະ ປະຊາຊົນຈີນ. ປີ 2021 ເປັນຂີດໝາຍສຳຄັນ ຄົບຮອບ 60 ປີ ຂອງສາຍພົວພັນການທູດລາວ-ຈີນ. ໃນຕົ້ນປີນີ້, ເລຂາທິການໃຫຍ່ ທ່ານ ທອງລຸນ ສີສຸລິດ ແລະ ທ່ານປະເທດປະເທດ ສີ ຈິ້ນປິງ ໄດ້ບັນລຸຂໍ້ຕົກລົງເຫັນດີຮ່ວມກັນກ່ຽວກັບທິດທາງໃນການເສີມສ້າງຮັດແໜ້ນສາຍພົວພັນຂອງທັງສອງປະເທດ. ທັງສອງຝ່າຍໄດ້ຕົກລົງເຫັນດີ ນຳພາການພັດທະນາໄປສູ່ ອະນາຄົດຮ່ວມກັນ, ນຳຜົນປະໂຫຍດໃຫ້ແກ່ປະຊາຊົນຂອງທັງສອງປະເທດ. ໃນການຕໍ່ສູ້ກັບການລະບາດຂອງພະຍາດ COVID-19, ສປ ຈີນ ໄດ້ສົ່ງວິຊາການແພດມາຊ່ວຍ ສປປ ລາວ ພ້ອມທັງໄດ້ບໍລິຈາກ ວັກຊີນຫຼາຍລ້ານໂດສ ເພື່ອຊ່ວຍ ປະຊາຊົນລາວ.

ສະເພາະບໍລິສັດ ຊີເຟີງ, ແຮງຈູງໃຈຫຼັກທີ່ໄດ້ມາລົງທຶນໃນ ລຊມລ ແມ່ນ ສາຍພົນພັນອັນດີງາມລະຫວ່າງ ສປປ ລາວ ແລະ ສປ ຈີນ ພ້ອມທັງ ແວດລ້ອມການລົງທຶນທີ່ເປັນມິດ ແລະ ມີສະຖຽນລະພາບໃນ ສປປ ລາວ. ພວກເຮົາເຫັນໄດ້ວ່າ ລັດຖະບານລາວ ຍິນດີເປີດຮັບ ແລະ ໃຫ້ການສະໜັບສະໜູນນັກລົງທຶນຕ່າງປະເທດ. ນັບຕັ້ງແຕ່ບໍລິສັດ ຊີເຟີງ ໄດ້ລົງທຶນໃນ ສປປ ລາວ, ລຊມລ ໄດ້ຮັບການສະໜັບສະໜູນຢ່າງຫຼວງຫຼາຍຈາກ ລັດຖະບານລາວ. ການສະໜັບສະໜູນນີ້ໄດ້ສ້າງຄວາມໝັ້ນໃຈໃຫ້ແກ່ ບໍລິສັດຊີເຟີງຂຸດຄົ້ນຄຳ ໃຫ້ລົງທຶນຫຼາຍຂຶ້ນໃນການສຳຫຼວດ ແລະ ໂຄງການກໍ່ສ້າງຕ່າງໆ, ເພື່ອສືບຕໍ່ພັດທະນາອຸດສາຫະກຳບໍ່ແຮ່ໃນ ສປປ ລາວ, ສ້າງວຽກເຮັດງານທຳ ແລະ ສືບຕໍ່ສະໜັບສະໜູນເສດຖະກິດລາວ ແລະ ຊຸມຊົນທ້ອງຖິ່ນ ໃຫ້ເປັນ ຄູ່ຮ່ວມພັດທະນາທີ່ຍາວນານ.

ຕັ້ງແຕ່ເລີ່ມດຳເນີນການຂຸດຄົ້ນ-ຜະລິດຄຳ-ທອງເປັນຕົ້ນມາ, ລຊມລ ໄດ້ປະກອບສ່ວນກວ່າ US$1.6 ຕື້ ໃຫ້ແກ່ ລັດຖະບານລາວ ເປັນ ຄ່າຊັບພະຍາກອນແຮ່ທາດ ແລະ ອາກອນ ບວກກັບຫຼາຍຮ້ອຍລ້ານໂດລາສະຫະລັດທີ່ໄດ້ລົງໃສ່ ການສະໜັບສະໜູນທຸລະກິດທ້ອງຖິ່ນ, ການພັດທະນາຊຸມຊົນ ແລະ ການລົງທຶນໃສ່ໂຄງລ່າງພື້ນຖານ.

# Photo Essay




ບໍ່ຄຳ ໂກເວີຣີອິສ



ກິລາຕີດອກປີກໄກ່ ຢູ່ສະໜາມໃນໄລຍະລ໋ອດກາວ ທີ່ຊ່ວຍປົດປ່ອຍຄວາມຄຽດ, ດີຕໍ່ຮ່າງກາຍ ແລະ ຈິດໃຈ ກ່າວ ສັກ ສີສົມບັດ.



ຖະໜົນຄອນກຣີດເສັ້ນທາງ 28ເອ, ຍາວ 200 ແມັດ, ເຂດບ້ານໜອງກະແດ້ງ .




ທ່ານ ບຸນປັນຄຳ ພັນດານຸວົງກ່າວວ່າ: "ທີມງານເຈາະຂອງພວກເຮົາມີບາດກ້າວໃໝ່ໃນການເພີ່ມປະສິດທິພາບຂອງການເຈາະໃນລະດູຝົນ ດ້ວຍເຕັກນິກໃໝ່ໆ."




ໂຄງການກໍ່ສ້າງໂຮງງານອົກຊີແຊນໃໝ່ຕອນກາງຄືນ.



ໃນຂະນະທີ່ທົ່ວໂລກພວມຮັບມືກັບ ການລະບາດຂອງພະຍາດ COVID-19, ແຄ້ມຫີນສົ້ມ ມີມູມປອດໄພສະຫງົບມູມໜຶ່ງ ໃນຄ້າຍແລງຕອນຕາເວັນຕົກດິນ ໃນວັນທີ 21 ສິງຫາ 2021.



ທີມງານ ຊີເຈາະ ແລະ ລະເບີດຫີນ




ການຈັດຕັ້ງປະຕິບັດມາດຕະການທີ່ເຂັ້ມງວດ ຂອງການນຳໃຊ້ໃບອະນຸຍາດເຂົ້າ-ອອກພາກສະໜາມ ເພື່ອປັບປຸງມາດຕະການປ້ອງກັນ ແລະ ຄວບຄຸມພະຍາດ COVID-19.




ພະພຸດທະຮູບອົງໃໝ່, ກຽມພ້ອມໃນການເດີນທາງ ສູ່ບ້ານບຸ່ງຄຳ, ເມືອງ ວິລະບູລີ.




"ພວກເຮົາຈຶ່ງລ້າງມືທຸກຄັ້ງກ່ອນຈັບບາຍອາຫານ, ກ່ອນສຳຜັດໃບໜ້າ ແລະ ພື້ນຜິວສຳຜັດທີ່ຈັບເປັນປະຈຳເຊັ່ນ: ລູກບິດປະຕູ, ຮາວຂັ້ນໄດ ແລະ ແປ້ນຕີຄອມພິວເຕີ້ ເພື່ອປ້ອງກັນພະຍາດບໍ່ໃຫ້ມາຕິດພວກເຮົາ".



ສອນວິທີການນຳໃຊ້ເຮືອໃຫ້ ທີມງານສຳຫຼວດນ້ຳ WTSF &TSF ເພື່ອໃຫ້ຖືກຕ້ອງຕາມລະບຽບການນຳໃຊ້ອຸປະກອນຢ່າງຖືກຕ້ອງ ແລະ ປອດໄພ.

# ຊົມເຊີຍພະນັກງານ LXML!




ໃນທຸກໆປີ, LXML ຈັດພິທີມອບໃບຍ້ອງຍໍ ກົງກັບ ວັນສະເຫຼີມສະ ຫຼອງວັນສະຖາປະຖາ ສປປ ລາວ ວັນທີ 2 ທັນວາ ເພື່ອຮັບຮູ້ ແລະ ຍ້ອງຍໍການປະກອບສ່ວນຂອງພະນັກງານ ຕໍ່ຜົນສໍາເລັດຂອງ ໂຄງການຂຸດຄົ້ນ-ຜະລິດ ຄໍາ-ທອງເຊໂປນ.

ໃນປີ 2021, ພວກເຮົາສະເຫຼີມສະຫຼອງ ພະນັກງານ 228 ທ່ານທີ່ໄດ້ເຮັດວຽກກັບ ບໍລິສັດມາໄດ້ຍາວນານແຕ່ 5 ເຖິງ 20 ປີ. ພະນັກງານທຸກຄົນທີ່ເຮັດວຽກຢູ່ບໍ່ຄໍາ-ທອງ ເຊໂປນ ໄດ້ປະກອບສ່ວນເຮັດໃຫ້ເປັນ ໂຄງການທີ່ປະສົບຜົນສໍາເລັດຈົນມາຮອດ ທຸກມື້ນີ້ ແລະ ພວກເຮົາທຸກຄົນກໍຄວນ ພາກພູມໃຈໃນຄວາມສໍາເລັດນີ້.

ປີ 2021 ນີ້ຄົບຮອບ 28 ປີຕັ້ງແຕ່ການຕໍ່ ຕັ້ງ ບໍລິສັດ LXML ບໍ່ຄໍາ-ທອງເຊໂປນ ແລະ ເກືອບ 20 ປີຕັ້ງແຕ່ເລີ່ມການດໍາເນີນ ງານ ຂຸດຄົ້ນ-ຜະລິດຄໍາ-ທອງເຊໂປນ. ມີ ພະນັກງານ ແລະ ຜູ້ຮັບເໝົາ 5.000 ຄົນທີ່ ໄດ້ປະກອບສ່ວນຕໍ່ການເຕີບໂຕຂອງ ບໍລິສັດ LXML ບໍ່ຄໍາ-ທອງເຊໂປນ, ໄດ້ຮຽນຮູ້ຝຶກຝົນ ສີມືທັກສະວິຊາຊີບ ແລະ ສ້າງຊີວິດການເປັນ ຢູ່ທີ່ດີຂຶ້ນ.

94% ຂອງພະນັກງານ LXML ແມ່ນຄົນ ລາວ, 75% ແມ່ນຊຸມຊົນທ້ອງຖິ່ນ ແລະ ຫຼາຍ ກວ່າ 20% ແມ່ນແມ່ຍິງ. ໃນສອງ-ສາມທົດ ສະຫວັດຜ່ານມາ, LXML ໄດ້ລົງທຶນຫຼາຍ ລ້ານໂດລາສະຫະລັດເຂົ້າໃສ່ການພັດທະນາ ຊັບພະຍາກອນມະນຸດ ລວມທັງ ທຶນການ ສຶກສາ, ການລົງຝຶກງານກັບບໍລິສັດ ແລະ ການຝຶກອົບ ຮົມຕົວຈິງເວລາເຮັດວຽກ. LXML ສືບຕໍ່ສະໜັບ ສະໜູນຄວາມກ້າວໜ້າ ໃນອາຊີບການງານ ແລະ ຄວາມມຸ່ງໝັ້ນຂອງ ພະນັກງານ ກໍຄືເພື່ອສ້າງວິຊາການມືອາຊີບ ຄົນລາວ ເພື່ອຜົນປະໂຫຍດຂອງ ສປປ ລາວ.

ທ່ານນາງ ວິໄລລັກ ວົງພິດ, ຫົວໜ້າຄຸມງານ ບັນຊີລາຍຈ່າຍ ໄດ້ກ່າວວ່າ: *"ຂ້າພະເຈົ້າມີ ຄວາມພາກພູມໃຈທີ່ໄດ້ເປັນສ່ວນໜຶ່ງຂອງ ຄວາມສໍາເລັດຕະຫຼອດໄລຍະ 20 ປີຜ່ານມາ. LXML ເປັນອົງກອນທີ່ສະແດງໃຫ້ເຫັນ ຄຸນ ທາດທີ່ດີ ລວມທັງການເອົາໃຈໃສ່ຕໍ່ຄວາມ ປອດໄພ, ຄວາມຊື່ສັດ ແລະ ການພັດທະນາ ບຸກຄະລາກອນ."* ທ່ານນາງ ວິໄລລັກ ໄດ້ເຮັດ ວຽກນໍາ LXML ພໍດີຄົບ 20 ປີ ໃນປີ 2021.

ນັບແຕ່ເລີ່ມດໍາເນີນງານ, LXML ບໍ່ຄໍາ-ທອງ ເຊໂປນໄດ້ປະກອບສ່ວນຫຼາຍກວ່າ US$1,6 ຕື້ເປັນລາຍຮັບໂດຍກົງໃຫ້ແກ່ ລັດຖະບານ ລາວ ຜ່ານການຈ່າຍພາສີອາກອນ ແລະ ຄ່າ ຊັບພະຍາກອນແຮ່ທາດ. ນອກນັ້ນ ກໍໄດ້ ປະກອບສ່ວນຜົນປະໂຫຍດທາງອ້ອມ ຜ່ານ ການພັດທະນາຊຸມຊົນ, ສ້າງວຽກເຮັດງານ ທໍາ ແລະ ການຝຶກອົບຮົມ-ສ້າງສີມືແຮງງານ ໃຫ້ແກ່ຄົນລາວ.

ທ່ານ ພໍ ແຮຣິສ, ຜູ້ຈັດການໃຫຍ່ LXML ໄດ້ ກ່າວຕໍ່ຜູ້ໄດ້ຮັບໃບຍ້ອງຍໍ-ລາງວັນວ່າ: "ທັກ ສະ ແລະ ປະສົບການທີ່ພະນັກງານເກັບກ່ຽວ ໄດ້ໃນຊຸມປີຜ່ານມາແມ່ນມີຄຸນຄ່າຍິ່ງ. ທັກ ສະເຫຼົ່ານີ້ຈະເປັນ ຊັບສິນ-ມໍລະດົກຕິດໂຕ ພະນັກງານທຸກຄົນບໍ່ວ່າພວກເຂົາຈະໄປເຮັດ ວຽກຢູ່ແຫ່ງໃດໃນ ສປປ ລາວ ກໍຕາມ.

ທ່ານ ພໍ ແຮຣິສ ຍັງໄດ້ກ່າວຕື່ມວ່າ: *"ພະນັກງານເປັນຊັບສິນອັນດັບໜຶ່ງຂອງ ພວກເຮົາ ແລະ ພວກເຂົາເປັນຜູ້ດໍາເນີນຜົນ ການຜະລິດຢ່າງປອດໄພ ໂດຍປະຕິບັດຄຸນ ທາດຂອງບໍລິສັດໃນແຕ່ລະວັນ. ໃນສອງປີ ຜ່ານມາ, ພະນັກງານຂອງພວກເຮົາໄດ້ພົບພໍ້ ຄວາມທ້າທາຍຫຼາຍສົມຄວນຈາກການ ລະບາດຂອງພະຍາດ COVID-19, ເຮັດ ໃຫ້ພວກເຂົາຢູ່ຫ່າງຈາກຄອບຄົວ ແລະ ຕ້ອງ ຈໍາກັດບໍລິເວນ ກໍຄື ເຮັດວຽກຍຽນທີ່ຍາວຂຶ້ນ. ຂ້າພະເຈົ້າມີຄວາມພາກພູມໃຈຢ່າງສູງ ແລະ ຂອບໃຈພະນັກງານ ແລະ ຜູ້ຮັບເໝົາຂອງ ພວກເຮົາ 5.000 ກວ່າຄົນ ທີ່ໄດ້ປະກອບ ສ່ວນຕໍ່ຜົນສໍາເລັດຂອງ ບໍລິສັດ."*

ພິທີມອບໃບຍ້ອງຍໍການເຮັດວຽກມາຍາວ ນານ ແມ່ນໄດ້ ຈັດໃນຂະໜາດນ້ອຍລົງ ເພື່ອ ປະຕິບັດສອດຄ່ອງກັບ ມາດຕະການປ້ອງກັນ ການລະບາດຂອງພະຍາດ COVID-19, ເປັນພິທີມອບໃນວົງແຄບ ໂດຍຜູ້ຈັດການ ແຕ່ລະພະແນກ ເພື່ອຫຼີກເວັ້ນ ການເຕົ້າໂຮມ ຄົນຈໍານວນຫຼາຍ.

# 2021 ລາງວັນເຮັດວຽກຍາວນານ

**20 ປີ**

ທ່ານ ນາງ ວິໄລລັກ ວົງພິດ

**15 ປີ**

ທ່ານ ນາງ ຫລ້າ ແສງຄໍາຢອງ
ທ່ານ ວິໄລພອນ ຈັນທິລາດ
ທ່ານ ຕຸ່ຊົ່ງ ບົວເນັ້ງ
ທ່ານ ໂພສີທັດ ສີບຸນເຮືອງ
ທ່ານ ວິສະວະກອນ ກວ່າແກ້ວວົງພ້າຍ
ທ່ານ ພົມວິຫານ ລັດຕະນະວົງ
ທ່ານ ບຸນປອນ ຈັນລະມະໂນ
ທ່ານ ບຸນຕໍາ ບຸດຕະໂຄດ
ທ່ານ ກາດອກ ໄຊສົມພອນ
ທ່ານ ຄອນຄໍາ ແກ້ວອຸດອນ
ທ່ານ ວັນດອນ ໂພທິສານ
ທ່ານ ນາງ ຄໍາແຫວນ ເທບສຸວັນ
ທ່ານ ສຸກສະຫ້ວນ ທໍາມະວົງສາ
ທ່ານ ນາມສະນະ ໂພທິພັນ
ທ່ານ ວິລະພອນ ວິລະຈິດ
ທ່ານ ຄົມ ອິນທະບຸນເຮືອງ
ທ່ານ ສອນວິໄຊ ເພັດຊຸມພູ
ທ່ານ ອຸດອນ ສຸດທະວົງ
ທ່ານ ບຸນປະເສີດ ແສງດາລາ
ທ່ານ ພູມໃຈ ອ້ວນພະຈັນ
ທ່ານ ເພັດສະໝອນ ບຸນມີໄຊຊະນະວົງ
ທ່ານ ຈັນທະຈັກ ປັດຖະວິໄລວົງ
ທ່ານ ແກ້ວລິດທິເດດ ຊຸມພົນພັກດີ
ທ່ານ ໜູໄພ ພະປະສິດ
ທ່ານ ໄພວັນ ເມກອາລຸນ
ທ່ານ ກິດແກ້ວ ໄຕຍະວົງ
ທ່ານ ວົງເດືອນ ກອງວົງສາ
ທ່ານ ອິນແປງ ອຸ່ນປະເສີດ
ທ່ານ ລິນເຊ ຊັບບັດ
ທ່ານ ໄກສອນ ສົມບັດບຸນເຮືອງ
ທ່ານ ສົມຫວັງ ເທບອານຸສິນ
ທ່ານ ອິນທອງ ສີທົນ
ທ່ານ ບົວລີ ໄວຍະກອນ

**10 ປີ**

ທ່ານ ເອກກະພົນ ຈູມພາວັນ
ທ່ານ ນາງ ຈິມມີ ກອງທອງມາ
ທ່ານ ຄໍາໃສ ພົມມາ
ທ່ານ ເພັງສະຫວັດ ກວນຄໍາແພງ
ທ່ານ ຄໍາພຸດ ວົງໄຊ
ທ່ານ ບຸນຍາລິດ ແກ້ວຫານາມ
ທ່ານ ດວງໃຈ ອ່າງມັດສາ
ທ່ານ ກົງໃຈ ແສງພະຈັນ
ທ່ານ ສົມພົງ ເວີນແກ້ວ
ທ່ານ ວິທະຍາໄລ ແສນພົມມະຈັກ
ທ່ານ ມູຊາ ໄຊປູ
ທ່ານ ຈັນທະໝອນ ສຸດສີເຍືອງມາ
ທ່ານ ແສງເພັດ ໄຊຍະຈັກ
ທ່ານ ຈັນທະຄອນ ເທບພະມັງທອງ
ທ່ານ ນາງ ແນນທະນາ ສີສົມບັດ
ທ່ານ ອຸ່ນເພັດ ແກ້ວມະນີ
ທ່ານ ນາງ ແກ້ວມະນີວອນ ພົມມະຈັນ
ທ່ານ ຊຽງສະຫ້ວນ ໄຊຍະເສນ
ທ່ານ ບຸນເຮືອງ ຈັນທະວົງ
ທ່ານ ສົມອນ ແກ້ວບຸນທັນ
ທ່ານ ດາວອນ ແສນທະວົງ
ທ່ານ ນາງ ມະນີວັນ ບຸນປອນ
ທ່ານ ຍົນ ຍົດທະວີ
ທ່ານ ອິນ ໄລມະນີ
ທ່ານ ນາງ ມະນີວັນ ລາດຊະບຸດ
ທ່ານ ນາງ ກອງຄໍາ ພູມມະລາດ
ທ່ານ ນາງ ສິດຕິໄຊ ຄໍາພາສຸກ
ທ່ານ ນາງ ຫຼອຍຄໍາ ພາສຸກ
ທ່ານ ບຸນໝອມ ອິນທິລັກ
ທ່ານ ລໍາມະນີ ຄໍາກອງ
ທ່ານ ລັດຕະນາ ທັດສະດາພອນ
ທ່ານ ນາງ ຄອນສະຫວັນ ໄຊສົງຄາມ
ທ່ານ ນາງ ສົມວິຫານ ສີລາໄຊ
ທ່ານ ຄໍາປາວ ສີບຸນລັບ
ທ່ານ ໂນລາ ສະກົນນະຄອນ
ທ່ານ ບອງເຣີ ເລຍແດງເຊີ
ທ່ານ ນາງ ສີສົມພູ ບາງພະໄຊ
ທ່ານ ສີພອນ ແສນທະວົງ
ທ່ານ ຈັນສຸກ ແກ້ວມະໂນລາ
ທ່ານ ພູວຽງ ສີທອງຈັນ
ທ່ານ ແກ່ນຕາ ແສງເດືອນ
ທ່ານ ເຮືອງ ນິມ
ທ່ານ ນາງ ພັນມະຫາ ສີສຸລາດ
ທ່ານ ນາງ ເອ ໄຊຍະຈັກ
ທ່ານ ບົວທອງ ວິໄລວົງ
ທ່ານ ບຸນມາ ມາວມະນີ
ທ່ານ ບຸນປອນ ກິດຕິລາດ
ທ່ານ ຈໍາປາ ວັນຄາຍ
ທ່ານ ດວງຕາ ໄຊຍະຈັກ
ທ່ານ ແກ້ວຕາ ອິນທາລາດ
ທ່ານ ແກ້ວອຸດອນ ເນດຄໍາ
ທ່ານ ລໍາພອນ ພົນນັດ
ທ່ານ ເລີນ ຄໍ້າກັດ
ທ່ານ ພົງສະຫວັນ ໄຄ່ຈັນ
ທ່ານ ພູມີ ສີພະຈັນ
ທ່ານ ນາງ ປອນມາ ສຸລິເຂັມ
ທ່ານ ສີພວດ ສຸວັນນະລາດ
ທ່ານ ສອນໄຊ ບຸດຕະໂຄດ
ທ່ານ ທອງໄລ ອາເຊຍ
ທ່ານ ຕຽນ ໄຊຍະລາດ
ທ່ານ ນາງ ຕຸກຕາ ກອງທອງມາ
ທ່ານ ນາງ ວັນທອງ ໄຊຈະເລີນ
ທ່ານ ນາງ ວອນມາ ຈັນທອນ
ທ່ານ ຄໍາປັນ ບຸນທັນ
ທ່ານ ຫຼາວຄໍາ ໄຊຍະວົງ
ທ່ານ ແຈ່ມ ສົມສຸລິຍາ
ທ່ານ ພາວົງ ຄໍາພົງ
ທ່ານ ສິດສຸກ ໄໝ່ສອນ
ທ່ານ ສົມສັກ ດໍາວິໄລ
ທ່ານ ທອງດໍາ ພັນວຽງມາ
ທ່ານ ວັນນີ ສີປະເສີດ
ທ່ານ ດວງຈິດ ພຸດສະລາດ
ທ່ານ ບຸນສົງ ອຸດົມສິນ
ທ່ານ ຣາມອນ ກົວດາລຸບ
ທ່ານ ຄູນມາ ແສນທະວີສຸກ
ທ່ານ ພູພານ ແກ້ວພະຈັນ
ທ່ານ ສົມປະດິດ ສິດທິສານ
ທ່ານ ນາງ ເພັດດາລາ ພິທັກ
ທ່ານ ວິໄລລັກ ອ່ອນພັນມະນີ
ທ່ານ ມະໂນທໍາ ພົນສີຍາ
ທ່ານ ແສງເດືອນ ແສ້ກ້ວຍ
ທ່ານ ອາລິຍະກອນ ສົງທິລາດ
ທ່ານ ອະນຸສັກ ສີຫາພົນ
ທ່ານ ສອນປະເສີດ ນິລະໄຊ
ທ່ານ ສອນທະວີ ວິໄລວົງ
ທ່ານ ຄໍາພຸດ ສີຫາລາດ
ທ່ານ ສິນຄໍາ ດຣາເຊັ້ງ
ທ່ານ ຄໍາແສນ ສຸລິຍະເດດ
ທ່ານ ເລື່ອງລິດ ຄໍາບຸນເຮືອງ
ທ່ານ ນາງ ແສງຄໍາ ບຸນຍາວົງ
ທ່ານ ຈັນທະລີ ສີວົງຄໍາຈັນ
ທ່ານ ສົມຄິດ ແກ້ວຈະເລີນ
ທ່ານ ຂັນເງິນ ພົງສະນິດ
ທ່ານ ນາງ ນ້ອຍມາ ມະຫາແກ້ວ
ທ່ານ ສຸພານິດ ເນົາວະລາດ
ທ່ານ ພູຂາວຄໍາ ແສງຈໍາພອນ
ທ່ານ ຫວາງໃຈ ແກ້ວມະນີວົງ
ທ່ານ ພອນສະຫວັນ ອິນທະວົງ
ທ່ານ ພູວັນໄຊ ທິລາວົງ
ທ່ານ ພົນເດດ ສີດາທອງ
ທ່ານ ນາງ ສັນຕິສຸກ ທິມມະຄອນ
ທ່ານ ໄວປະຍຸດ ສຸລິລໍາວົງ
ທ່ານ ບຸນເພັງ ໄຊບຸນຊູ
ທ່ານ ພອນສັກ ໃຊອາງຸ່ນ
ທ່ານ ສຸພາພອນ ສໍພູທາວົງ
ທ່ານ ແອນ້ອຍ ແກ່ນຈັນ
ທ່ານ ລະຄອນຄໍາ ລາດສະລຸນ
ທ່ານ ທອງດໍາ ສັງທອງ
ທ່ານ ບຸນຮຽງ ວັນທະໝອມ
ທ່ານ ກາລະສອນ ສີທະໄວ
ທ່ານ ສຸລິຍາ ພົມສີມອນ
ທ່ານ ຈະເລີນ ສີພັດໃຈ
ທ່ານ ຄໍາບົດ ວົງວິລັດ
ທ່ານ ຄໍາດີ ເພັງຄໍາ
ທ່ານ ລາລີ ສີຊົມພູ
ທ່ານ ລໍາເງິນ ສີດາມານ
ທ່ານ ນຸ່ຍ ສຸດໃຈ
ທ່ານ ນາງ ໄພລິນ ນິ່ງມະໂນ
ທ່ານ ນາງ ເພັດຈໍາພອນ ໄຊຍະສານ
ທ່ານ ນາງ ພິມມະສອນ ວົງຄໍາຊາວ
ທ່ານ ສິດອກແກ້ວ ສຸທິໄທ
ທ່ານ ສີຫົງຄໍາ ວິໄລພອນ
ທ່ານ ສີນ້ອຍ ດວງສະຫ້ວນ
ທ່ານ ທອງ ເພັງຄໍາຕັນ
ທ່ານ ໄວ ຫຼວງອາດ
ທ່ານ ວັນທາ ໄຊຍະແສນ
ທ່ານ ວໍລະຈິດ ດວງພະຈັນ
ທ່ານ ຄໍາມະນີ ວິໄລສັກ
ທ່ານ ວົງເພັດ ໄຊສົມບັດ
ທ່ານ ໂນລາ ວົງສຸລາດ
ທ່ານ ແຈ່ມ ພິມມະສອນ
ທ່ານ ແສງສັກສິດ ຈອມເບົ້າບັນດິດ
ທ່ານ ສົມເກດ ແກ້ວອິນຕອງ
ທ່ານ ຕຸ່ນ ອິຊີຊຽງໄໝ
ທ່ານ ຄໍາໃຈ ພຸດທະວົງ
ທ່ານ ກີ້ ພົມມະເທບ
ທ່ານ ວຽງຄໍາ ສີສົມບັດ
ທ່ານ ພູລໍາພອນ ພະສະຫ້ວດ
ທ່ານ ທະນົງສັກ ຫຼວງລາດ
ທ່ານ ໄຊຍະວົງ ພົມພິທັກ
ທ່ານ ຄອນຄໍາ ວິໄລສຸກ
ທ່ານ ກອງໄມ ອາເຕ້

**5 ປີ**

ທ່ານ ນາງ ເພັດສາຄອນ ພອນແກ້ວ ປະເສີດ
ທ່ານ ຄຣິດສ໌ຕອບເຟີ ຣອກເກີສ໌
ທ່ານ ສົມສັກ ເຄນກິດທະສັກ
ທ່ານ ຈິຣາຫວັດ ສຸກອົມ
ທ່ານ ເຄືອວັນ ນໍາຜົນ
ທ່ານ ໄມໂຄ ເນວສັນ
ທ່ານ ແດນເນວ ເທຣນເນີ
ທ່ານ ບຸນຍາສິດ ແກ້ວສະເດັດ
ທ່ານ ຈົ່ງ ຄອງຈັນດາ
ທ່ານ ຄໍາແພງ
ທ່ານ ກອງແພງ ຜາສຸລາດ
ທ່ານ ສໍາລານ ເພັດໄຊພອນ
ທ່ານ ສີສົມເພັດ ໜຸກຄໍາ
ທ່ານ ສຸກັນ ສີສະເກດ
ທ່ານ ທອງໃບ ໄຊຈະເລີນ
ທ່ານ ເອບນະຄອນ ມະນີວົງ
ທ່ານ ບຸນເພັງ ສຸວັນລັງ
ທ່ານ ບຸນຊູ ສີປະເສີດ
ທ່ານ ທໍານ້ອຍ
ທ່ານ ຫຼິງວົງທອງ ໄຊຍະສອນ
ທ່ານ ໂອສາ ແກ້ວວິໄລຄໍາ
ທ່ານ ແສງເພັດ ສີສຸພັນ
ທ່ານ ເຫີນຟ້າ ຈັນຕະວິລາດ
ທ່ານ ນາງ ມະຍຸລີ ລາດຊະບັນດິດ
ທ່ານ ນາງ ສອນໄຊ ຂັນຕິສັກ
ທ່ານ ບຸດດີ ອຸປະຫວາດ
ທ່ານ ນາງ ລັດດາວັນ ກາລິນ
ທ່ານ ຕ້ອມ ດີປະເສີດ
ທ່ານ ອາໂນດ ກູລັງໂກ
ທ່ານ ຈັນທະລາ ສຸທໍາມະວົງ
ທ່ານ ພົງສະຫ້ວນ
ທ່ານ ສັກສິດ
ທ່ານ ສອນສະຫວັນ ນົງມະໂນ
ທ່ານ ແອ່ນປີ ສຸທໍາມະວົງ
ທ່ານ ຄໍາໝັ້ນ ອຶ້ງນຽມວົງ
ທ່ານ ອິນພອນ ສຸພັນຈັນ
ທ່ານ ຄືລີວັນ ວິລະມົງຄົນ
ທ່ານ ຄອນສະຫວັນ ແພງມະນີ
ທ່ານ ອໍລີເວີ ຊັງກາ
ທ່ານ ເພັດສະໝອນ ມາດມະນີວົງ
ທ່ານ ພົງສະຫວັນ ຄໍາແພງເມືອງ
ທ່ານ ສະໂມຣາໂປມ ຟູໄຈ
ທ່ານ ສິດທິໄຊ ສະຫວັນຈັນດີ
ທ່ານ ສົມສຸກ ໄຊປັນຍາ
ທ່ານ ວົງພະຈັນ ວົງດາລາ
ທ່ານ ຍົກ ສີຄໍາເພົາ
ທ່ານ ສຸດທະວົງ ບຸນຕາ
ທ່ານ ນົກນອຍ ແສງມະນີ
ທ່ານ ສັນຕິສຸກ ວັນນະສິດ
ທ່ານ ສີສຸວັນ ມຸນນີເວດ
ທ່ານ ສອນອານົງ ແສງສະຫ່ວາງ
ທ່ານ ຖາໄພພອນ ວົງທິລາດ


ລາງວັນ
ເຮັດວຽກຍາວນານ
2021